| | |
|---|---|
| ປະເພດເອກະສານ: | ມາດຖານ ຂອງ RA |
| ຂອບເຂດ: | ສປປ ລາວ |
| ສະຖານະພາບຂອງເອກະສານ: | ສົມບູນ |
| ວັນທີສຳເລັດເອກະສານ: | 01/ 06/ 2010 |
| ໄລຍະໃຫ້ການປຶກສາຫາລື: | N/A |
| ອົງກອນຮັບຮອງ: | ພັນທະມິດປ່າຊຸ່ມຊື່ນ (RA) |
| ບຸກຄົນທີ່ສາມາດພົວພັນ: | ຄຣິສະຕຽນ ສະລອດທ໌ (Christian Sloth) |
| ອີເມລ ( e-mai)l: | csloth@ra.org |
| ຫົວຂໍ້: | ມາດຕະຖານຂອງສະມາດວູດ(SW) ສຳຫລັບ ການກວດສອບແຫລ່ງທີ່ມາທາງກົດໝາຍ (VLO) ຢູ່ ສປປ ລາວ |
| ລະຫັດເອກະສານ ຂອງ SW: | VER22 |

.@ສະຫງວນລິຂະສິດ

**ພາກສະເໜີ**

ຈາກການຮັບຮູ້ທີ່ເພີ້ມຂື້ນ ຕໍ່ ຜົນກະທົບທາງລົບ,ຂະໜາດ ແລະ ຂອບເຂດຂອງການຂຸດຄົ້ນທີ່ຜິດກົດໝາຍໃນທົ່ວໂລກ, ດ້ວຍເຫດນີ້; ການແກ້ໄຂໃນທາງປະຕິບັດແມ່ນມີຄວາມຈຳເປັນສຳຫລັບບັນດາບໍລິສັດ ເພື່ອສະແດງໃຫ້ເຫັນວ່າ ຜະລິດຕະພັນທີ່ໄດ້ຂຸດຄົ້ນຈາກປ່າທີ່ຜິດກົດໝາຍບໍ່ໄດ້ຢູ່ໃນຕ່ອງໂສ້ການສະໜອງຂອງພວກເຂົາ. ສະນັ້ນ; ການກວດສອບແຫລ່ງທີ່ມາທາງກົດ ໝາຍແມ່ນວິທີນື່ງເພື່ອຕອບໂຈດຈຸດປະສົງດັ່ງກ່າວ.

ໂຄງການ Smartwood ຂອງພັນ ທະມິດປ່າ ຊຸ່ມຊື່ນ (Rainforest Alliance) (ຕໍ່ຈາກນີ້ເອີ້ນວ່າ Smartwood)ໄດ້ພັດທະນາມາດຕະຖານທົ່ວໄປສຳຫລັບການກວດສອບແຫລ່ງທີ່ມາທາງກົດໝາຍ(VLO) ເພື່ອກວດສອບວ່າ ໄມ້ທ່ອນນັ້ນມີແຫລ່ງກຳເນີດມາຈາກແຫລ່ງປ່າທີ່ມີເອກະສານສິດທີ່ຖືກຕ້ອງຕາມກົດໝາຍໃນການຂຸດຄົ້ນໂດຍອີງຕາມນິຕິກຳຕ່າງໆ.
ນອກຈາກນີ້ ແຫລ່ງຂອງໄມ້ຕ້ອງສະແດງໃຫ້ເຫັນການຮັບຮອງ ຕາມແຜນຈັດສັນຄຸ້ມຄອງປ່າທີ່ໄດ້ປັບປຸງ, ແລະເອກະສານຕ່າງໆທີ່ຈຳເປັນໃນຂອບເຂດວຽກງານທີ່ໄດ້ອະນຸຍາດ ຕະຫລອດທັງ ເອກະສານອະນຸຍາດ, ເອກະສານອ້າງອີງຕ່າງໆ ໃນການຈ່າຍພາສີ, ແລະ ຄ່າຊົບພະຍາກອນ. ນອກນັ້ນ; ຍັງມີ ເງື່ອນໄຂທາງດ້ານການຄ້າ, ການຂົນສົ່ງ, ແລະຄ່າລົງທະບຽນ.

ມາດຖານນີ້ໄດ້ດັດປັບມາຈາກມາດຖານ VLC ທົ່ວໄປຂອງ SW ທີ່ໄດ້ນຳເອົານິຕິກຳຕ່າງໆ ຂອງລາວເຂົ້າມາເພີ້ມ.

SmartWood ຕ້ອງການໃຫ້ບໍລິສັດທີ່ຈະນຳໃຊ້ ການກວດສອບທາງກົດໝາຍເປັນບາດກ້າວທຳອິດເພື່ອກ້າວໄປຫາການຍັ້ງຢືນການຈັດສັນຄຸ້ມຄອງປ່າແບບຍືນຍົງ ແລະ ຈະສືບຕໍ່ການປະເມີນຜົນກິດຈະກຳຕ່າງໆຂອງອົງການຈັດຕັ້ງທີ່ກ່ຽວຂ້ອງ

ເພື່ອໃຫ້ໄດ້ຮັບການຢັ້ງຢືນໃນລະດັບສູງ ອີງຕາມການຕັດສິນໃຈວ່າຈະສືບຕໍ່ສັນຫາການບໍລິການ ການກວດສອບຄວາມຖືກຕ້ອງບໍ ຫລືບໍ່. SW ໄດ້ສົ່ງເສີມການເຂົ້າສູ່ການກວດສອບຂອງລູກຄ້າໃນແນວທາງຂອງSW ໂດຍລວມ; ເອີ້ນວ່າ ໂຄງການ SmartStep. ຖ້າທ່ານສົນໃຈເພີ້ມເຕີມໃຫ້ເຂົ້າເບິ່ງໃນ website ວ່າດ້ວຍການກວດສອບຄວາມຖືກຕ້ອງທາງກົດໝາຍ (http://www.rainforestalliance.org/forestry.cfm?id=legal_verification).

### ຄຳເຫັນຂອງສາທາລະນະ

ບັນດາອົງການຈັດຕັ້ງ ຫລື ບຸກຄົນ ສາມາດນຳສະເໜີ ສິ່ງທີ່ກ່ຽວຂ້ອງ ຫລືຄຳຄິດເຫັນ ຂອງຕົນ ທີ່ກ່ຽວພັນກັບມາດຖານນີ້ ໄປຫາ SmartWood ໂດຍສົ່ງໄປທາງ email ຕາມທີ່ຢູ່ຂ້າງເທິງ ຫລື ໃຊ້ແບບຟອມ ທີ່ມີໃນ Website www.rainforest alliance.org. ສົ່ງໄປກໍໄດ້.

### ສິ່ງຄວນເອົາໃຈໃສ່ໃນການນຳໃຊ້ມາດຖານນີ້

ໃນລັກສະນະທັງໝົດຂອງມາດຖານນີ້ແມ່ນໄດ້ຖືກພິຈາລະນາໃຫ້ເປັນຕົວແບບ, ລວມມີ ກອບ, ວັນທີມາດຖານນີ້ມີຜົນສັກສິດ, ເອກະສານອ້າງອີງ, ຄຳສັບ ແລະ ນິຍາມ, ຕາຕະລາງ ແລະບົດແນບທ້າຍ ແລະອື່ນໆທີ່ໄດ້ກ່າວໄວ້.

**ສາລະບານ**


A ກອບຂອງມາດຖານ

B ວັນທີມາດຖານນີ້ມີຜົນສັກສິດ

C ເອກະສານອ້າງອີງ

D ຄໍາສັບ ແລະ ນິຍາມ

E ມາດຖານ ແລະເງື່ອນໄຂຕ່າງໆ

Part I: ຫລັກການ ແລະ ຕົວຊີ້ວັດ ສໍາຫລັບ ການກວດສອບການເຮັດຕາມກົດໝາຍ

Part II: ໃບກວດສອບ, ການລາຍງານ ແລະ ການກວດກາ

Part III:ນະໂຍບາຍຂອງການບໍລິການການກວດສອບ


**ບົດແນບທ້າຍ**


ບົດແນບທ້າຍ 1 ອະທິບາຍຄໍາສັບ

ບົດແນບທ້າຍ 2: ແຫລ່ງທາງດ້ານກົດໝາຍ ແລະການຖືຄອງໃນລສປປລາວ.

ບົດແນບທ້າຍ 3: ບັນຊີ ກົດໝາຍປ່າໄມ້ ທີ່ນໍາໃຊ້ຂອງທ້ອງຖິ່ນຫລື ຂອງຊາດ, ເງື່ອນໄຂທາງດ້ານການບໍລິຫານ ແລະ ເອກະສານທາງກົດໝາຍຂອງ ສປປ ລາວ.

ບົດແນບທ້າຍ 4: ບັນຊີ ຊະນິດພັນໃກ້ຈະສູນພັນ ໃນ ສປປ ລາວ.

ບົດແນບທ້າຍ 5: ບັນຊີ ຂໍ້ຕົກລົງ/ສັນຍາ ທາງສະພາບແວດລ້ອມ ແລະ ສົນທິສັນຍາ ຂອງອົງການແຮງງານໂລກ ທີ່ລາວໄດ້ລົງນາມຮ່ວມ.

## A ກອບຂອງມາດຖານ

ມາດຖານນີ້ ຈະນຳໃຊ້ກັບຜູ້ຜະລິດ, ຜູ້ປຸງແຕ່ງ, ພໍ່ຄ້າ ແລະ ຜູ້ສະໜອງຜະລິດຕະພັນປ່າບໍ່ວ່າຈະເປັນແຕ່ລະບໍລິສັດ ຫລື ສ່ວນນຶ່ງຂອງຕ່ອງໂສ້ການສະໜອງທີ່ໄດ້ກຳນົດໄວ້.

ຜູ້ປະກອບການໃນການຈັດສັນຄຸ້ມຄອງປ່າໄມ້ ຕ້ອງໄດ້ຖືກປະເມີນຜົນຕໍ່ກັບຫລັກການທັງໝົດ ຂອງມາດຖານນີ້. ມາດຖານນີ້ແມ່ນໃຊ້ກວດສອບພື້ນທີ່ ແລະ ບໍ່ໄດ້ກວດສອບວັດຖຸທີ່ເປັນລຸ້ນ/ໝວດຕ່າງໆ.

ບໍລິສັດການຄ້າ, ປຸງແຕ່ງ ຫລື ຜະລິດອື່ນໆຢູ່ພາຍໃນຕ່ອງໂສ້ສະໜອງ ທີ່ຢູ່ພາຍໃຕ້ການປະເມີນຜົນ ຊຶ່ງ ໄດ້ຊື້, ປຸງແຕ່ງ, ຈັດການ ແລະ/ຫລື ຂາຍຜະລິດຕະພັນປ່າ ຈາກ ແຫລ່ງປ່າທີ່ໄດ້ກວດສອບຄວາມຖືກຕ້ອງທາງກົດໝາຍ ຕ້ອງມີລະບົບຕ່ອງໂສ້ຄຸ້ມຄອງເອກະສານທີ່ເຊື່ອມໂຍງກັບວັດຖຸທີ່ໄດ້ກວດສອບ ໄປຫາປ່າໄມ້ທີ່ເປັນຕົ້ນກຳເນີດ. ໃນກໍລະນີທີ່ບໍລິສັດການຄ້າ ຫລືປຸງແຕ່ງ ທີ່ຈະຊື້, ປຸງແຕ່ງ ແລະຂາຍວັດຖຸທີ່ໄດ້ກວດສອບ, ບັນດາບໍລິສັດເຫລົ່ານັ້ນຕ້ອງໄດ້ຖືກກວດສອບຕາມຫລັກການທີ 4 ແລະ ຕ່ອງໂສ້ການຄຸ້ມຄອງ (COC) ຊຶ່ງວ່າ ບໍລິສັດສາມາດສ້າງເອກະສານອ້າງອີງໃສ່ການສະໜອງວັດຖຸທີ່ໄດ້ກວດສອບ.

ເພື່ອກວດສອບລະບົບຕ່ອງໂສ້ການຄຸ້ມຄອງ (COC) ທີ່ມີຢູ່, ມາດຖານນີ້ໄດ້ສັງລວມເອົາອົງປະກອບທີ່ສຳຄັນ ຈາກ ***ມາດຖານຕ່ອງໂສ້ການຄຸ້ມຄອງ (COC) ຂອງ SW ສຳຫລັບ ການນຳໃຊ້ທົ່ວໄປ*** ,ຫລື CoC ທົ່ວໄປ (CoC 36).

ຫລັກການ 1 ຫາ 4 ປະກອບມີ ມາດຖານຄວາມຖືກຕ້ອງທາງກົດໝາຍທີ່ໄດ້ກວດສອບ ແລະ ຕ່ອງໂສ້ການຄຸ້ມຄອງ (COC). ຫລັກການ ນີ້ປະກອບມີ ເງື່ອນໄຂຕ່າງໆ ທີ່ອີງໃສ່ຂັ້ນຕອນ ແລະ ລະບົບ ທີ່ນຳໃຊ້ເພື່ອກວດກາໄມ້ ຫລື ຜະລິດຕະພັນຕ່າງໆກັບຄືນ ໃນແຕ່ລະຈຸດ. ກອບທາງພູມສັນຖານ ຂອງ ມາດຖານນີ້ ກວມເອົາສະເພາະແຕ່ ສປປ ລາວ.

## B ວັນທີມາດຖານນີ້ມີຜົນສັກສິດ

ມາດຖານນີ້ຈະມີຜົນສັກສິດນັບແຕ່ມື້ ສະບັບສົມບູນໄດ້ຖືກຮັບຮອງ. ມາດຖານນີ້ອາດຈະຖືກປັບປຸງແຕ່ລະປີ, ປ່ຽນແທນສະບັບເກົ່າທີ່ໄດ້ທົບທວນ. ການດຳເນີນງານທີ່ໄດ້ກວດສອບທັງໝົດແມ່ນຈຳເປັນຕ້ອງໃຫ້ເຮັດຕາມສະບັບທີ່ໄດ້ທົບທວນພາຍໃນ 6 ເດືອນ ຫລັງຈາກອອກສະບັບດັ່ງທ່າວມາ.

## C ເອກະສານອ້າງອີງ

VER-03 SmartWood Generic Standard for Verification of Legal Origin (VLO) 18 Jan 10
VER-04 SmartWood Generic Standard for Verification of Legal Compliance (VLC) 18 Jan 10
COC-33 SmartWood Master Report Template 05 Jan 09
COC-36 SmartWood Chain-of-Custody Standard for General Applications (Generic CoC)
COC-52 SmartWood Guidance for Multi-site and Group CoC Revisions in 2007

FSC-STD-30-010 V2-0 EN Controlled Wood Standard for Forest Management Enterprises
FSC-STD-40-005 V2-0 EN Standard for Company Evaluation of Controlled Wood
FSC-STD-40-003 (version 1) EN Standard for Multi-site certification of COC Operations
Lao PDR has not adopted any National Standards at this time.

## D ຄຳສັບ ແລະ ນິຍາມ

CAR: ຂໍ້ສະເໜີໃຫ້ແກ້ໄຂ

CITES: ສົນທິສັນຍາສາກົນ ວ່າດ້ວຍ ການຄ້າຂາຍຊະນິດພັນພືດ ແລະ ສັດປ່າ ທີ່ໃກ້ຈະສູນພັນ

CoC: ຕ່ອງໂສ້ການຄຸ້ມຄອງ

CW: ໄມ້ທີ່ໄດ້ຄວບຄຸມແຫລ່ງທີ່ມາ

FMEs: ຜູ້ປະກອບການ ໃນການຈັດສັນຄຸ້ມຄອງປ່າໄມ້

ILO: ອົງການແຮງງານສາກົນ

RA: ພັນທະມິດປ່າຊຸ່ມຊື່ນ

SW: ສະມາດວູດ

VLC: ການກວດສອບການເຮັດຕາມກົດໝາຍ

VLO: ການກວດສອບແຫລ່ງທີ່ມາທາງກົດໝາຍ

## E ມາດຖານ ແລະເງື່ອນໄຂຕ່າງໆ

### ພາກ I: ຫລັກການ ແລະ ຕົວຊີ້ວັດ ສຳຫລັບ ການກວດສອບແຫລ່ງທີ່ມາທາງກົດໝາຍ

ໃນມາດຖານີ້ ແຕ່ລະຫລັກການ ແລະ ຕົວຊີ້ວັດຂອງມັນ ແມ່ນໄດ້ກຳນົດຕາມຕົວຊີ້ວັດທົ່ວໄປ. ມາດຖານ ແລະຕົວຊີ້ວັດທັງໝົດຈະຕ້ອງຖືກກວດສອບ ໃນທຸກໆການກວດສອບປະຈຳປີ, ຍົກເວັ້ນແຕ່ວ່າ ບາງມາດຖານ ແລະຕົວຊີ້ວັດບໍ່ໄດ້ຖືກນຳໃຊ້ພາຍໃຕ້ການປະເມີນຜົນ.

<u>**ຫລັກການ 1: ສິດທາງກົດໝາຍສຳຫລັບການຂຸດຄົ້ນ**</u>

*ສະຖານະພາບທາງກົດໝາຍຂອງໜ່ວຍງານ (ຂດ) ຈັດສັນຄຸ້ມຄອງປ່າ (FMU) ຕ້ອງໄດ້ກຳນົດແຈ້ງ ແລະຕ້ອງໄດ້ກຳນົດຂອບເຂດພື້ນທີ່ຈັດສັນໃຫ້ລະອຽດ. ຜູ້ປະກອບການໃນການຈັດສັນຄຸ້ມຄອງປ່າ (FME) ຕ້ອງພິສູດໄດ້ວ່າ ເຂົາໄດ້ຮັບສິດທາງກົດໝາຍ ເພື່ອດຳເນີນງານ ແລະ ເພື່ອຂຸດຄົ້ນໄມ້ຈາກຂອບເຂດປ່າທີ່ໄດ້ກຳນົດໄວ້.*

1.1: ຕ້ອງມີການລົງທະບຽນທາງກົດໝາຍທີ່ເປັນເອກະສານອ້າງອີງ ແລະຈະແຈ້ງ ຂອງຜູ້ປະກອບການທີ່ມີສິດໃນການດຳເນີນກິດຈະກຳການຈັດສັນຄຸ້ມຄອງປ່າ.

1.1.1: ຜູ້ປະກອບການໃນການຈັດສັນຄຸ້ມຄອງປ່າ (FME) ຕ້ອງມີ ແບບຟອມ/ເລກທີ ການລົງທະບຽນພາສີ ທີ່ຍັງໃຊ້ການໄດ້ຢູ່ ແລະ ໃບອະນຸຍາດດຳເນີນທຸລະກິດ ເພື່ອດຳເນີນງານພາຍໃຕ້ກອບທາງກົດໝາຍ.

- *ຜູ້ປະກອບການໃນການຈັດສັນຄຸ້ມຄອງປ່າ (FMEs) ຕ້ອງປະຕິບັດຕາມເງື່ອນໄຂ ຂອງ ການອະນຸຍາດ ແລະ ທະບຽນ ແລະ ມີສະຖານະພາບທີ່ດີ ອີງຕາມ ກົດໝາຍທຸລະກິດ (2005); ກົດໝາຍປ່າໄມ້ (2007); ດຳລັດຂອງນາຍົກ 17 (2008); ລະບຽບການ ຂອງກະຊວງອຸດສະຫະກຳ ແລະ ການຄ້າ 1976 (2007); ລະບຽບການ ຂອງກະຊວງອຸດສະຫະກຳ ແລະ ການຄ້າ 2056 (2008); ລະບຽບການ ຂອງກະຊວງອຸດສະຫະກຳ ແລະ ການຄ້າ1963 (2008)*
- *ໂຮງງານປຸງແຕ່ງໄມ້ທັງໝົດ ຕ້ອງເຮັດຕາມກົດໝາຍທຸລະກິດ (2005) ແລະ ລະບຽບການ ຂອງກະຊວງອຸດສະຫະກຳ ແລະ ການຄ້າ 719 (2009)*
- *ຜູ້ປະກອບການໃນການຈັດສັນຄຸ້ມຄອງປ່າ (FMEs) ຕ້ອງເປັນສະມາຊິກສະມາຄົມປຸງແຕ່ງໄມ້ແຫ່ງຊາດ; ດຳລັດນາຍົກ 17 (2008); ລະບຽບການ ຂອງກະຊວງອຸດສະຫະກຳ ແລະ ການຄ້າ 359 (2008); ລະບຽບການ ຂອງກະຊວງອຸດສະຫະກຳ ແລະ ການຄ້າ 1976 (2007)*
- *ຜູ້ປະກອບການໃນການຈັດສັນຄຸ້ມຄອງປ່າ (FMEs) ຕ້ອງໄດ້ຮັບອະນຸຍາດທີ່ຈຳເປັນໃນການຂຸດຄົ້ນໄມ້ ແລະເຮັດທຸລະກິດກັບຜະລິດຕະພັນ ອີງຕາມມາດຖານທີ່ໄດ້ສ້າງຂື້ນ, ດຳລັດນາຍົກ17 (2008); ລະບຽບການ ຂອງກະຊວງອຸດສະຫະກຳ ແລະ ການຄ້າ 221 (2007)*
- *ຜູ້ປະກອບການໃນການຈັດສັນຄຸ້ມຄອງປ່າ (FMEs) ຕ້ອງມີບັນຊີທະນາຄານ ໃນທະນາຄານການຄ້າຕ່າງປະເທດ ຢູ່ສປປ ລາວ; ລະບຽບການ ຂອງກະຊວງອຸດສະຫະກຳ ແລະ ການຄ້າ 2056 (2008); ລະບຽບການ ຂອງກະຊວງອຸດສະຫະກຳ ແລະ ການຄ້າ 1976 (2007)*

1.1.2: ທະບຽນ ຂອງ ຜູ້ປະກອບການໃນການຈັດສັນຄຸ້ມຄອງປ່າ (FMEs) ຕ້ອງໄດ້ຖືກອະນຸຍາດ ອີງຕາມຂັ້ນຕອນທີ່ໄດ້ກຳນົດທາງກົດໝາຍ.

1.1.3: ບ່ອນທີ່ຈຳເປັນທາງກົດໝາຍ, ການອອກທະບຽນ ແລະສິດທາງກົດໝາຍ ຕ້ອງເປີດເຜີຍໃຫ້ສາທາລະນະຮູ້ກ່ອນຈະເລີ້ມດຳເນີນກິດຈະກຳໃດນື່ງໃນເຂດຈັດສັນຄຸ້ມຄອງ (FMUs).

1.1.4: ສະຖານະພາບທາງກົດໝາຍຂອງການດຳເນີນງານ ຫລື ສິດໃນການສືບຕໍ່ກິດຈະກຳທີ່ໄດ້ຈັດຕັ້ງຂື້ນ ຕ້ອງບໍ່ໃຫ້ກ່ຽວພັນກັບສານຍຸດຕິທຳ ຫລື ຄຳສັ່ງທາງກົດໝາຍເພື່ອໃຫ້ຊື້ນສຸດການປະຕິບັດງານດັ່ງກ່າວ.

- *ຜູ້ປະກອບການໃນການຈັດສັນຄຸ້ມຄອງປ່າ (FMEs) ຕ້ອງຢູ່ໃນສະພາບ ທີ່ດີ ໃນເງື່ອນໄຂທາງທຸລະກິດ ແລະ ການປ່າໄມ້ ແລະ ບໍ່ຝ່າຝືນກົດໝາຍທຸລະກິດ (2005); ກົດໝາຍປ່າໄມ້ (2007); ດຳລັດຂອງນາຍົກ 17 (2008); ລະບຽບການ ຂອງກະຊວງອຸດສະຫະກຳ ແລະ ການຄ້າ 1976 (2007); ລະບຽບການ ຂອງກະຊວງອຸດສະຫະກຳ ແລະ ການຄ້າ 2056 (2008)*

1.1.5: ຖ້າສະຖານະພາບ ແລະ ສິດທາງກົດໝາຍ ມີຄວາມສ່ຽງ, ຜູ້ປະກອບການໃນການຈັດສັນຄຸ້ມຄອງປ່າ (FMEs) ຕ້ອງໄດ້ເຂົ້າສູ່ຂະບວນການທາງກົດໝາຍເພື່ອແກ້ໄຂບັນຫາຄວາມສ່ຽງດັ່ງກ່າວ.

1.2: ຜູ້ປະກອບການໃນການຈັດສັນຄຸ້ມຄອງປ່າ (FMEs) ຕ້ອງມີອະນຸຍາດໃນການຂຸດຄົ້ນໃນເຂດຈັດສັນຄຸ້ມຄອງປ່າ.

1.2.1: ຜູ້ປະກອບການໃນການຈັດສັນຄຸ້ມຄອງປ່າ (FMEs) ຕ້ອງມີ ການອະນຸຍາດທີ່ປັນເອກະສານອ້າງອີງຈາກ

ຜູ້ເປັນເຈົ້າຂອງຊັບພະຍາກອນເພື່ອຂຸດຄົ້ນ, ລວມທັງ ສິດຕາມປະເພນີ ຖ້າສິດດັ່ງກ່າວ ຖືກ ຮັບຮູ້ທາງກົດໝາຍ.

1.2.2: ຜູ້ປະກອບການໃນການຈັດສັນຄຸ້ມຄອງປ່າ (FMEs) ຕ້ອງຖືໃບອະນຸຍາດທີ່ຍັງມີອາຍຸການໃຊ້ໄດ້ ຫລື ເຄື່ອງມືທີ່ຄ້າຍຄືກັນ ທີ່ກ່ຽວພັນກັບການຂຸດຄົ້ນໄມ້.

- *ຜູ້ປະກອບການໃນການຈັດສັນຄຸ້ມຄອງປ່າ (FMEs) ຕ້ອງໄດ້ຮັບອະນຸຍາດທີ່ຈຳເປັນ, ມີການຮັບຮອງ ແລະ ມີສັນຍາໃນການຄ້າຂາຍໄມ້ທ່ອນ ແລະ ຊັກລາກ;ກົດໝາຍປ່າໄມ້ (2007); ດຳລັດນາຍົກ 17 (2008); ດຳລັດນາຍົກ 59 (2002); ລະບຽບການກະຊວງອຸດສະຫະກຳ ແລະການຄ້າ 1963 (2008)*

1.2.3: ຕ້ອງອອກໃບອະນຸຍາດ ຫລື ເຄື່ອງມືທີ່ຄ້າຍຄືກັນທາງກົດໝາຍ ໂດຍເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ອີງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ

1.3: ຕ້ອງມີຫລັກຖານວ່າ ເຂດຄຸ້ມຄອງປ່າແມ່ນໄດ້ກຳນົດປະເພດການນຳໃຊ້ທີ່ດິນ ທາງກົດໝາຍແລ້ວ ຫລື ກິດຈະກຳທາງ ການຄ້າທີ່ໄດ້ດຳເນີນການ.

1.3.1: ກິດຈະກຳການຂຸດຄົ້ນໄມ້ ຕ້ອງໃຫ້ສອດຄ່ອງກັບ ການຈັດປະເພດການນຳໃຊ້ທີ່ດິນທາງກົດໝາຍ ສຳຫລັບເຂດຄຸ້ມຄອງປ່າໄມ້.

- *ການຂຸດຄົ້ນຕ້ອງເຮັດໃນເຂດປ່າຜະລິດທີ່ໄດ້ກຳນົດໄວ້ແລ້ວ, ໂດຍຈັດແບ່ງໃຫ້ຖືກຕ້ອງ, ໄດ້ສຳຫລວດ, ແລະໃຫ້ຢູ່ພາຍໃຕ້ແຜນຈັດສັນ,ເຂດໂຄງລ່າງພື້ນຖານທີ່ໄດ້ກຳນົດ ຫລື ເຂດປ່າປູກ; ກົດໝາຍປ່າໄມ້ (2007); ດຳລັດນາຍົກ 59 (2002); ລະບຽບການຂອງກະຊວງອຸດສະຫະກຳ ແລະ ການຄ້າ 488 (2009)*

1.3.2: ຖ້າຈຳເປັນທາງກົດໝາຍ, ເຂດທີ່ຈະຂຸດຄົ້ນຕ້ອງສະແດງໃຫ້ເຫັນໃນແຜນທີ່ ໃນມາດຕາສ່ວນທີ່ເໝາະສົມ ເພື່ອໃຫ້ສາມາດຮູ້ຂອບເຂດໄດ້.

1.3.3: ເຂດຂຸດຄົ້ນຕ້ອງບໍ່ໃຫ້ມີຂໍ້ຂັດແຍ້ງກັບການນຳໃຊ້ທີ່ດິນຕ່າງໆທີ່ໄດ້ກຳນົດເປັນເຂດຫ້າມການຂຸດຄົ້ນ.

- *ການຂຸດຄົ້ນໄມ້ເພື່ອການຄ້າບໍ່ຕ້ອງໃຫ້ມີໃນເຂດທີ່ໄດ້ກຳນົດເປັນເຂດປ່າສະຫງວນແຫ່ງຊາດ ຫລືປ່າອະນຸລັກ; ກົດໝາຍປ່າໄມ້ (2007); ດຳລັດນາຍົກ 17 (2008); ລະບຽບການ ຂອງ ກະຊວງກະສິກຳ ແລະປ່າໄມ້ 524 (2001)*

1.3.4: ການກຳນົດເຂດຄຸ້ມຄອງປ່າທີ່ຈະມີການຂຸດຄົ້ນຕ້ອງປະຕິບັດຕາມຂັ້ນຕອນທີ່ໄດ້ກຳນົດທາງກົດໝາຍ.

- *ການຮັບຮອງການຂຸດຄົ້ນໄມ້ຕ້ອງໃຫ້ຢູ່ໃນເຂດປ່າຜະລິດເທົ່ານັ້ນ ໂດຍຜ່ານການສຳຫລວດ ແລະ ແຜນຈັດສັນຄຸ້ມຄອງປ່າແບບຍືນຍົງ ແລະເຂດພັດທະນາໂຄງລ່າງພື້ນຖານອີງຕາມເງື່ອນໄຂ ພິເສດ;ກົດໝາຍປ່າໄມ້ (2007); ດຳລັດນາຍົກ 17 (2008).*

**<u>ຫລັກການ 2: ການດຳເນີນງານ ແລະ ການອະນຸຍາດ ທີ່ໄດ້ຮັບຮອງ</u>**

*ກິດຈະການ ຂອງການຄຸ້ມຄອງປ່າ ຕ້ອງໄດ້ຮັບການຮັບຮອງ ເພື່ອເປັນເງື່ອນໄຂພື້ນຖານໃນການວາງແຜນ, ຕ້ອງກຳນົດອອກທາງກົດໝາຍຖ້າຈຳເປັນເພື່ອໃຫ້ແຜນຈັດສັນຄຸ້ມຄອງສາມາດດຳເນີນການ ແລະ ໃຫ້ຕິດແໜ້ນກັບເງື່ອນໄຂທາງການດຳເນີນງານ.*

2.1: ຕ້ອງມີແຜນຈັດສັນຄຸ້ມຄອງປ່າ ທີ່ໄດ້ຮັບຮອງແລ້ວໂດຍເຈົ້າໜ້າທີ່ ທີ່ກ່ຽວຂ້ອງ.

2.1.1: ຕ້ອງມີແຜນຈັດສັນຄຸ້ມຄອງປ່າ ທີ່ໄດ້ຮັບຮອງແລ້ວໂດຍເຈົ້າໜ້າທີ່ ທີ່ກ່ຽວຂ້ອງ.

– *ການຂຸດຄົ້ນ ແລະ ກິດຈະກຳຕ່າງໆ ໃນປ່າຜະລິດ ຕ້ອງໃຫ້ຢູ່ໃນເຂດທີ່ມີແຜນຈັດສັນຄຸ້ມ ຄອງປ່າ ແບບຍືນຍົງ ໂດຍຜ່ານຂັ້ນຕອນຕ່າງໆທີ່ຈຳເປັນ.*

2.1.2: ແຜນຈັດສັນຄຸ້ມຄອງປ່າ ຕ້ອງໄດ້ຮັບຮອງ ອີງຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນກົດໝາຍ.

– *ໂຄຕາຂຸດຄົ້ນໄມ້ປະຈຳປີ ແລະ ແຜນຂຸດຄົ້ນປະຈຳປີຕ້ອງເຮັດຕາມການສຳຫລວດ ກ່ອນການ ຂຸດຄົ້ນ,ການຂຶ້ນບັນຊີໄມ້ຢືນຕົ້ນ ແລະ ການຮັບຮອງ.*

2.1.3: ຕ້ອງຢັ້ງຢືນຫລັກຖານທີ່ຈະແຈ້ງ (ເຊັ່ນ: ແຜນທີ່) ວ່າ ເຂດຈັດສັນຄຸ້ມຄອງໄດ້ຕັ້ງ ຢູ່ໃນເຂດຄຸ້ມຄອງປ່າທີ່ໄດ້ຮັບອະນຸຍາດແລ້ວ.

2.1.4: ແຜນການຂຸດຄົ້ນຕ້ອງໄດ້ເປີດເຜີຍຕໍ່ສາທາລະນະກ່ອນການເລີ້ມດຳເນີນງານ. .

2.2: ຕ້ອງມີແຜນການຂຸດຄົ້ນ ຫລື ແຜນການດຳເນີນງານປະຈຳປີ ທີ່ໄດ້ຮັບຮອງແລ້ວ ໂດຍ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ.

2.2.1: ຕ້ອງມີແຜນຂຸດຄົ້ນ ຫລື ແຜນການດຳເນີນງານປະຈຳປີ ທີ່ໄດ້ຮັບຮອງແລ້ວໃນປະຈຸບັນ.

2.2.2: ເນື້ອໃນຂອງແຜນຂຸດຄົ້ນ ຫລື ແຜນການດຳເນີນງານປະຈຳປີຕ້ອງມີໃນແຜນຈັດສັນຄຸ້ມຄອງປ່າທີ່ໄດ້ຮັບຮອງ ແລະ ໃຫ້ສອດຄ່ອງກັບພາກສະໜາມ.

– *ການຂຸດຄົ້ນຕ້ອງເຮັດຕາມແຜນຂຸດຄົ້ນປະຈຳປີ ແລະ ໂຄຕາໄມ້ທີ່ໄດ້ຮັບຮອງຈາກລະດັບທ້ອງຖິ່ນ ຫາລະດັບຊາດ.*

2.3: ຕ້ອງສັງລວມເອົາໂຄຕາ ຫລື ການອະນຸຍາດຕັດປະຈຳປີ ແລະ ຂະໜາດຂອບເຂດ ທີ່ໄດ້ກຳນົດໄວໃນກົດໝາຍເຂົ້າໃນເອກະສານການດຳເນີນງານ ແລະ ການວາງແຜນ ທີ່ຈະມາຈັດຕັ້ງປະຕິບັດ.

– *ກິດຈະກຳ ການຜະລິດ ແລະ ການຂຸດຄົ້ນ ຕ້ອງເຮັດຕາມແບບຟອມ, ຂະໜາດ ແລະການວັດແທກ.*

2.4: ການຂຸດຄົ້ນ ແລະ ການຕັດປໍ້າ ຕ້ອງໃຫ້ຢູ່ໃນຂອບເຂດ ແລະ ຊະນິດພັນ ທີ່ໄດ້ຮັບຮອງ ອີງຕາມລະບຽບການຂອງທ້ອງຖິ່ນ, ຂອງຊາດ ຫລື ຂອງຂົງເຂດ; ສິ່ງເຫລົ່ານີ້ຕ້ອງໄດ້ປະຕິບັດຕາມໃນເວລາປະຕິບັດຕົວຈິງ ແລະຕ້ອງໄດ້ກຳນົດໃນແຜນຂຸດຄົ້ນ ຫລື ແຜນດຳເນີນງານ.

2.4.1: ຕ້ອງຂຸດຄົ້ນແຕ່ຊະນິດພັນທີ່ອະນຸຍາດ ຕາມກົດໝາຍກຳນົດ.

2.4.2: ຕ້ອງຂຶ້ນບັນຊີ ຊະນິດພັນໄມ້ ທີ່ພົບເຫັນ ໃນເຂດຄຸ້ມຄອງ ທີ່ຫ້າມຂຸດຄົ້ນ ເຂົ້າໃສ່ໃນແຜນດຳເນີນງານ, ກຳນົດໃສ່ໃນແຜນທີ່ ແລະ ໝາຍໃນພື້ນທີ່ຕົວຈິງ.

2.4.3: ຕ້ອງຂຸດຄົ້ນໃນເຂດຄຸ້ມຄອງທີ່ອະນຸຍາດ ແລະຫ້າມຂຸດຄົ້ນໃນເຂດທີ່ບໍ່ອະນຸຍາດ ຫລື ເຂດຫວງຫ້າມ.

– *ການຂຸດຄົ້ນຕ້ອງເຮັດໃນແຕ່ເຂດທີ່ໄດ້ຈັດໃຫ້ເປັນເຂດປ່າຜະລິດ, ໄດ້ສຳຫລວດ ແລະຢູ່ໃນແຜນຈັດສັນຄຸ້ມຄອງປ່າ.*

2.4.4: ແຜນຈັດສັນຄຸ້ມຄອງປ່າ ແລະແຜນທີ່ຕ້ອງລວມເອົາ ການກຳນົດເຂດຕ່າງໆ ໃນເຂດຄຸ້ມຄອງປ່າ ບ່ອນທີ່ບໍ່ອະນຸຍາດໃຫ້ຂຸດຄົ້ນ ຫລື ເຂດຫວງຫ້າມທາງກົດໝາຍ(ເຊັ່ນ: ເຂດກັນຊົນຕາມສາຍນໍ້າ, ເຂດທີ່ມີຄວາມຄ້ອຍຊັນສູງ,ແລະ ອື່ນໆ)

2.4.5: ໄມ້ທີ່ຍຶດໄດ້ຈາກການເຮັດຜິດກົດໝາຍຈະບໍ່ອະນຸຍາດໃຫ້ກວດສອບທາງກົດໝາຍເດັດຂາດ ໃນກໍລະນີໃດກໍຕາມ. .

2.5: ຕ້ອງກະກຽມການປະເມີນຜົນທາງສິ່ງແວດລ້ອມ ແລະ ທາງສັງຄົມ .

2.5.1: ການປະເມີນຜົນທາງສິ່ງແວດລ້ອມ ແລະ ທາງສັງຄົມຕ້ອງຖືກຮັບຮອງໂດຍເຈົ້າໜ້າທີ່ ທີ່ກ່ຽວຂ້ອງ.

– *ໃນບາງກໍລະນີ; ການປະເມີນຜົນທາງສິ່ງແວດລ້ອມ ແລະ ທາງສັງຄົມ ຕ້ອງໄດ້ເຮັດໃນເຂດປ່າຜະລິດ ແລະ ເຂດພັດທະນາໂຄງລ່າງພື້ນຖານ ບ່ອນທີ່ຈະມີການຂຸດຄົ້ນ; ກົດໝາຍປ່າໄມ້ (2007); ກົດໝາຍສະພາບແວດລ້ອມ (1996)*

**<u>ຫລັກການ 3: ການຈ່າຍພາສີ ແລະພັນທະອື່ນໆ ທີ່ກ່ຽວຂ້ອງ</u>**

*ກິດຈະການ ການຄຸ້ມຄອງຈັດສັນປ່າຕ້ອງບັນລຸຕາມການຈ່າຍຄ່າພາສີ,ຄ່າອາກອນ ແລະ/ຫລື ຄ່າຊັບພະຍາກອນ ທີ່ຈຳເປັນຕ້ອງໄດ້ປະຕິບັດຕາມ ຕະຫລອດທັງ ການຮັກສາສິດທາງກົດໝາຍ ໃນການຂຸດຄົ້ນ ແລະ ບໍລິມາດຂຸດຄົ້ນທີ່ໄດ້ອະນຸຍາດ.*

3.1: ຕ້ອງຈ່າຍພາສີ, ຄ່າຊັບພະຍາກອນ ແລະ ຄ່າອື່ນໆ ທີ່ໄດ້ກຳນົດໄວ້ໃນກົດໝາຍ.

3.1.1: ຕ້ອງມີຫລັກຖານທີ່ເປັນເອກະສານອ້າງອີງຈະແຈ້ງ ທີ່ວ່າ ກິດຈະການ ການຄຸ້ມຄອງປ່າ ແມ່ນໄດ້ຈ່າຍຄ່າຕ່າງໆທີ່ຈຳເປັນ ໃນປະຈຸບັນ ແລະ ໄດ້ຮັກສາ ເອກະສານອ້າງອີງໄວ້ ເຊັ່ນ: ໃບຮັບເງິນຄ່າຊັບພະຍາກອນ, ຄ່າອາກອນຕ່າງໆ ແລະຄ່າທຳນຽມຕ່າງໆ ໂດຍຜູ້ທີ່ກ່ຽວຂ້ອງ.

– *ການຂາຍໄມ້ຕ້ອງເຮັດຕາມເງື່ອນໄຂລາຄາ ຂອງກະຊວງອຸດສະຫະກຳ ແລະ ການຄ້າໂດຍມີການເກັບຄ່າພາສີ, ຄ່າຊັບພະຍາກອນ ແລະຄ່າຂຸດຄົ້ນ, ຄ່າປູກປ່າຄືນ ແລະຄ່າອະນຸຍາດຕ່າງໆ ທີ່ຈຳເປັນ.*

3.1.2: ຕ້ອງດຳເນີນການເກັບພາສີຕາມຊະນິດພັນໄມ້, ຂະໜາດ, ບໍລິມາດ ອີງຕາມການກຳນົດທາງກົດໝາຍ.

3.1.3: ຕ້ອງຈ່າຍຄ່າພາສີ ແລະຄ່າຊັບພະຍາກອນ ຕາມບໍລິມາດທີ່ໄດ້ຂຸດຄົ້ນຕົວຈິງ, ຊະນິດພັນ ແລະ ຄຸນນະພາບ ອີງຕາມກົດໝາຍ.

– *ຕ້ອງຈ່າຍຄ່າພາສີ ແລະຄ່າຊັບພະຍາກອນ ໃຫ້ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ກ່ອນ ອອກອະນຸຍາດທີ່ຈຳເປັນ.*

**<u>ຫລັກການ 4: ການຄ້າຂາຍ, ການຂົນສົ່ງ ແລະ ການລົງທະບຽນທາງກົດໝາຍ</u>**

*ອົງການຈັດຕັ້ງ (ບໍລິສັດ ຫລື ຜູ້ປະກອບການໃນການຈັດສັນຄຸ້ມຄອງປ່າ) ຕ້ອງໄດ້ລົງທະບຽນ ແລະຮັບຮອງທາງກົດໝາຍເພື່ອດຳເນີນທຸລະກິດທີ່ໄດ້ກຳນົດໄວ້ ຕະຫລອດທັງ ຕ້ອງປະຕິບັດຕາມຂໍ້ກຳນົດ, ຂັ້ນຕອນ ແລະ ລະບຽບການຂົນສົ່ງ, ການຄ້າ, ການນຳເຂົ້າ ແລະສົ່ງອອກ.*

4.1: ອົງການຈັດຕັ້ງ ຕ້ອງໄດ້ລົງທະບຽນ ແລະໄດ້ຮັບອະນຸຍາດງທາງກົດໝາຍຈາກເຈົ້າໜ້າທີ່ ທີ່ກ່ຽວຂ້ອງເພື່ອ ດຳເນີນທຸລະກຳທີ່ໄດ້ກຳນົດໄວ້.

- *ອົງການຈັດຕັ້ງທີ່ອະນຸຍາດໃຫ້ນຳໃຊ້, ຂຸດຄົ້ນ, ຂົນສົ່ງ ແລະຄ້າຂາຍ ຜະລິດຕະພັນໄມ້ ແລະ ຜະລິດຕະພັນປ່າ ຕ້ອງໄດ້ຮັບອະນຸຍາດ, ຕ້ອງປັບລຸຕາມມາດຖານທີ່ຈຳເປັນ ແລະມີຖານະພາບທີ່ໝັ້ນຄົງທາງກົດໝາຍ ກັບ ຕົວແທນຂອງລັດທີ່ກ່ຽວຂ້ອງ.*

4.2: ລາຍໄດ້ ຈາກການຂາຍໄມ້ ແລະ ຜະລິດຕະພັນໄມ້ ຕ້ອງແຈ້ງໃຫ້ຮັບຊາບ ອີງຕາມນິຕິກຳ, ແລະຕ້ອງຈ່າຍພາສີລາຍໄດ້ ຄົບຖ້ວນ ຕາມກຳນົດເວລາ..

- *ສັນຍາຂາຍໄມ້ ອາດຈະຖືເປັນໂມຄະ ຖ້າ ອົງການຈັດຕັ້ງຫາກບໍ່ເຮັດຕາມເງື່ອນໄຂໃນການຈ່າຍຄ່າພາສີ ແລະຄ່າຊັບພະຍາກອນ ແລະ ການເກັບລາຍໄດ້ທັງໝົດ ຈາກໄມ້ທ່ອນ ແລະ ກິດຈະກຳຕ່າງໆກັບຜະລິດຕະພັນໄມ້ ຕ້ອງໃຫ້ສອດຄ່ອງກັບນິຕິກຳທີ່ເໝາະສົມ.*

4.3: ອົງການຈັດຕັ້ງ ຕ້ອງປະຕິບັດຕາມ ລະບຽບການ ຂົນສົ່ງໄມ້ ແລະຜະລິດຕະພັນໄມ້ ແລະ/ຫລື ຂໍ້ຫ້າມຕ່າງໆ.

- *ອົງການຈັດຕັ້ງ ຕ້ອງໄດ້ຮັບການອະນຸຍາດ ແລະການຮັບຮອງທີ່ຈຳເປັນ ສຳຫລັບການຂົນສົ່ງ ໄມ້ ແລະ ຜະລິດຕະພັນໄມ້ ຈາກ ສະໜາມໄມ້ຕ່າງໆ ພາຍໃນ ສປປ ລາວ ລວມທັງສັນຍາຊື້ຂາຍ, ການຢັ້ງຢືນການຈ່າຍຄ່າອາກອນ, ຄ່າຊັບພະຍາກອນຕ່າງໆ.*

4.4: ອົງການຈັດຕັ້ງ ຕ້ອງປະຕິບັດຕາມ ຂໍ້ຫ້າມ ແລະ ລະບຽບການນຳເຂົ້າ ແລະ/ຫລື ສົ່ງອອກ, ການຄ້າຂາຍຕ່າງໆ.

4.4.1: ການອະນຸຍາດໃຫ້ຄ້າຂາຍຊະນິດພັນທີ່ຢູ່ໃນບັນຊີ CITES ຕ້ອງເຮັດເປັນເອກະສານອ້າງອີງ,ແລະ ເຮັດຕາມເງື່ອນໄຂ ແລະຂໍ້ກຳນົດຕ່າງໆ ຂອງ CITES.

- *ອົງການຈັດຕັ້ງ ທີ່ຕັ້ງໃຈຄ້າຂາຍ, ນຳເຂົ້າ ຫລື ສົ່ງອອກຊະນິດພັນ ໄມ້, ພືດ ແລະສັດປ່າ ທີ່ຢູ່ໃນບັນຊີ CITES ຕ້ອງເຮັດຕາມນິຕິກຳທີ່ໄດ້ຈັດຕັ້ງປະຕິບັດໃນ ສປປ ລາວ.*

4.5: ອົງການຈັດຕັ້ງ ຕ້ອງປະກອບເອກະສານທີ່ເປັນຫລັກຖານທີ່ຢູ່ໃນຄວາມຮັບຜິດຊອບໃຫ້ຈະແຈ້ງສຳຫລັບໄມ້ ແລະ ຜະລິດຕະພັນໄມ້ເພື່ອການນຳເຂົ້າ ແລະສົ່ງອອກ ອີງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

- *ອົງການຈັດຕັ້ງຕ້ອງໄດ້ຮັບອະນຸຍາດ ແລະ ຮັບຮອງທີ່ຈຳເປັນ ສຳຫລັບ ການຂົນສົ່ງ ແລະ ການນຳເຂົ້າ, ການສົ່ງອອກໄມ້ທ່ອນ ແລະ ຜະລິດຕະພັນໄມ້.*

4.6: ຄຳວ່າຂໍ້ຕົກລົງຂອງການຂາຍ ໄມ້ ແລະຜະລິດຕະພັນໄມ້ ຕ້ອງປະຕິບັດຕາມຢ່າງເຄັ່ງຄັດ.

<u>ຫລັກການ ຕ່ອງໂສ້ການຄຸ້ມຄອງ (CoC):</u>

*ການຄວບຄຸມທາງເອກະສານໃນຕ່ອງໂສ້ການຄຸ້ມຄອງ (CoC) ຜະລິດຕະພັນປ່າໄມ້ ແມ່ນເງື່ອນໄຂພື້ນຖານໃນການກວດກາກັບຄືນຫາຜະລິດຕະພັນປ່າທີ່ໄດ້ກວດສອບແລ້ວໂດຍຜ່ານການປຸງແຕ່ງ ແລະການຈຳໜ່າຍ ເພື່ອຮັບປະກັນ ຄວາມເປັນຈິງ ຂອງການຢັ້ງຢືນຜະລິດຕະພັນທີ່ໄດ້ກວດສອບແລ້ວ.*

*ຫລັກການນີ້ແມ່ນນຳໃຊ້ຈາກຈຸດຂຸດຄົ້ນໄປເຖິງປະຕູປ່າ (ສະໜາມໄມ້) ສຳຫລັບ ກິດຈະການການຈັດສັນຄຸ້ມຄອງປ່າ (FMEs) ແລະ ລະຫວ່າງບາດກ້າວການຈັດການຕ່າງໆໃນໂຮງງານປຸງແຕ່ງ, ຜູ້ສະໜອງ, ຜູ້ຜະລິດເປັນສິນຄ້າ ແລະຜູ້ຄ້າຂາຍ. "ມາດຖານການຜະລິດໃນປ່າ" ແມ່ນອີງໃສ່ CoC ສຳຫລັບຜູ້ປະກອບການໃນການຈັດສັນຄຸ້ມຄອງປ່າ . ມາດຖານ*

*ຫລາຍເຂດ ແມ່ນພຽງແຕ່ນໍາໃຊ້ ໃນກໍລະນີ ການກວດສອບ ໄດ້ລວມເອົາເຂດຕ່າງໆເຂົ້າໃນກອບຂອງການກວດສອບ. ບັນຊີກວດກາ CoC ແມ່ນພຽງແຕ່ນໍາໃຊ້ກັບ ມາດຖານຂອງ SmartWood ສໍາຫລັບ ການກວດສອບແຫລ່ງທີ່ມາທາງກົດໝາຍ(VLO) ແລະການກວດສອບການເຮັດຕາມກົດໝາຍ (VLC). ການກວດສອບທາງກົດໝາຍອື່ນໆ ອາດຈະຖືກຮັບຮອງໂດຍ SmartWood ໂດຍທຽບເທົ່າກັບ VLO ຫລື VLC; ການຮັບຮອງດັ່ງກ່າວຈະຕິດປະກາດຢູ່ໃນ website ຂອງ Rainforest Alliance ເວລານໍາມາໃຊ້. ໝາຍເຫດ: ໃນມາດຖານ CoC, "ຄໍາວ່າກວດສອບແລ້ວ" ແມ່ນອີງໃສ່ ວັດຖຸ ທີ່ຖືກຕ້ອງຕາມ VLO/VLC ຂອງ SmartWood ຫລື ທຽບເທົ່າ.*

***ມາດຖານ ລະບົບຄຸ້ມຄອງຄຸນນະພາບ:***

***CoC 1: ອົງການຈັດຕັ້ງ ຕ້ອງກໍານົດຄວາມຮັບຜິດຊອບໃນລະບົບ CoC ແລະແຕ່ງຕັ້ງພະນັກງານຮັບຜິດຊອບ ດັ່ງນີ້:***

a. ຕ້ອງແຕ່ງຕັ້ງພະນັກງານຮັບຜິດຊອບ ລະບົບຄວບຄຸມ CoC 1 ຄົນ;

b. ແຕ່ງຕັ້ງພະນັກງານແຕ່ລະຄົນຮັບຜິດຊອບແຕ່ລະສ່ວນ ໃນລະບົບຄວບຄຸມ CoC.

CoC 2: ອົງການຈັດຕັ້ງ ຕ້ອງພັດທະນາ ແລະ ຮັກສາ ລະບົບຄວບຄຸມທາງເອກະສານ ທີ່ປັບປຸງຂໍ້ມູນໃຫ້ໃຊ້ໄດ້ໃນປະຈຸບັນ,ວິທີການ ແລະ /ຫລື ບົດແນະນໍາໃນການເຮັດວຽກ ເພື່ອຮັບປະກັນການຈັດຕັ້ງປະຕິບັດ ຕາມເງື່ອນໄຂຂອງມາດຖານ CoC ທີ່ນໍາໃຊ້.

CoC 3: ອົງການຈັດຕັ້ງ ຕ້ອງພັດທະນາ ແລະຈັດຕັ້ງປະຕິບັດ ຂັ້ນຕອນຕ່າງໆ ເພື່ອແກ້ ໄຂ ການບໍ່ເຮັດຕາມ(ຂໍ້ສະເໜີໃຫ້ແກ້ໄຂ, ຂໍ້ສັງເກດເຫັນ) ທີ່ຜູ້ກວດສອບໄດ້ກໍານົດໃຫ້.

CoC 4: ອົງການຈັດຕັ້ງ ຕ້ອງພັດທະນາ ແລະຈັດຕັ້ງປະຕິບັດ ຂັ້ນຕອນການກວດສອບພາຍໃນ ໃນລະບົບຂອງມັນ ອີງຕາມເງື່ອນໄຂ ໃນມາດຖານນີ້.

CoC 5: ອົງການຈັດຕັ້ງ ຕ້ອງພັດທະນາ ເງື່ອນໄຂໃນການຝຶກອົບຮົມ ແລະຈັດຕັ້ງປະຕິບັດການຝຶກອົບຮົມ ດັ່ງຕໍ່ໄປນີ້:

a. ພະນັກງານ ແລະ ກໍາມະກອນທີ່ເຮັດວຽກທັງໝົດ ຕ້ອງໄດ້ຮັບການຝຶກອົບຮົມ ອີງຕາມຂັ້ນຕອນຂອງ CoC ;

b. ຕ້ອງເກັບຮັກສາບົດບັນທຶກ ແລະເອກະສານຕ່າງໆ ເພື່ອສະແດງໃຫ້ເຫັນວ່າໄດ້ເຮັດການຝຶກອົບຮົມ.

CoC 6: ອົງການຈັດຕັ້ງ ຕ້ອງກໍານົດ ແລະ ສ້າງເອກະສານອ້າງອີງຕາມປະເພດການຢັ້ງຢືນ ແລະກໍານົດແຕ່ລະກຸ່ມຜະລິດຕະພັນ ທີ່ຈະກວດກາກັບຄືນຫາແຫລ່ງທີ່ມາໄດ້ ຕາມປະເພດການຢັ້ງຢືນທີ່ນໍາໃຊ້.

CoC 7: ອົງການຈັດຕັ້ງ ຕ້ອງສ້າງເອກະສານອ້າງອີງເຖິງຄວາມສາມາດສະໜອງວັດຖຸດິບທີ່ໄດ້ກວດສອບແລ້ວ. .

CoC 8: ອົງການຈັດຕັ້ງຕ້ອງສ້າງແລະຮັກສາບົດບັນທຶກຕ່າງໆ ເພື່ອສ້າງເປັນເອກະສານອ້າງອີງເຖິງປະລິມານ ຂອງຜະລິດຕະພັນ ຕໍ່ກັບ ວັດຖຸດິບທີ່ໄດ້ກວດສອບດັ່ງນີ້:

a. ການຜະລິດ ວັດຖຸດິບ;

b. ການຊື້ ສິ່ງນໍາເຂົ້າ/ວັດຖຸດິບ;

c. ວັດຖຸດິບທີ່ໄດ້ນໍາໃຊ້ໃນການຜະລິດ, ລວມທັງ ປັດໃຈການປ່ຽນແປງ (ການແປຮູບ);

d. ວັດຖຸດິບ ແລະ ຜະລິດຕະພັນສຳເລັດຮູບ ໃນສາງ;

e. ຜະລິດຕະພັນສຳເລັດຮູບ ທີ່ໄດ້ຂາຍໂດຍມີການຢັ້ງຢືນ ແລະບໍ່ໄດ້ຢັ້ງຢືນ.

*ມາດຖານການຜະລິດໃນປ່າ:*

*ມາດຖານການຜະລິດໃນປ່າແມ່ນນຳໃຊ້ກັບ ກິດຈະການ ການຈັດສັນຄຸ້ມຄອງປ່າ (FMEs). ນອກຈາກ ມາດຖານການຜະລິດໃນປ່າແລ້ວ; ກິດຈະການ ການຈັດສັນຄຸ້ມຄອງປ່າ (FMEs) ພາຍໃຕ້ ການປະເມີນຜົນ ຕ້ອງເຮັດຕາມມາດຖານເພີ້ມເຕີມໃນຫລັກການຂອງ CoC .*

CoC 9: ຂັ້ນຕອນແລະການປະຕິບັດກິດຈະການ ການຈັດສັນຄຸ້ມຄອງປ່າ (FMEs) ຕ້ອງສະໜອງການຄວບຄຸມຜະລິດຕະພັນປ່າໃຫ້ມີປະສິດທິຜົນ ຈາກ ໄມ້ຢືນຕົ້ນ ຈົນເຖິງ ການຖ່າຍໂອນຄວາມເປັນເຈົ້າຂອງຢູ່ປະຕູປ່າ (ສະໜາມໄມ້) .

CoC 10: ຂັ້ນຕອນແລະການປະຕິບັດກິດຈະການ ການຈັດສັນຄຸ້ມຄອງປ່າ (FMEs) ຕ້ອງຄວບຄຸມ ຄວາມສ່ຽງທີ່ເກີດຈາກການປະປົນຂອງຜະລິດຕະພັນທີ່ໄດ້ກວດສອບ ແລະ ບໍ່ໄດ້ກວດສອບ ທີ່ມາຈາກແຫລ່ງອື່ນນອກກອບຂອງການກວດສອບ.

CoC 11: ກິດຈະການ ການຈັດສັນຄຸ້ມຄອງປ່າ (FMEs) ຕ້ອງກຳນົດ “ປະຕູປ່າ”, ສຳຫລັບແຕ່ລະຜະລິດຕະພັນທີ່ໄດ້ກວດສອບ ຕາມລະບົບCOC: ປະຕູປ່າອາດຈະແມ່ນ ຈຸດຕົ້ນໄມ້ຢືນ; ສະໜາມໄມ້ໃນປ່າ; ສະໜາມໄມ້ ຂອງຜູ້ຊື້; ສະໜາມໄມ້ລວມ; ແລະອື່ນໆ.

*CoC 12:* ຕ້ອງມີລະບົບເພື່ອກຳນົດ ຜະລິດຕະພັນຈາກກິດຈະການ ການຈັດສັນຄຸ້ມຄອງປ່າ ທີ່ໄດ້ກວດສອບ( ເຊັ່ນ: ໂດຍຜ່ານລະບົບ ການສ້າງເອກະສານອ້າງອີງ ຫລື ການໝາຍ) ຢູ່ປະຕູປ່າ(ສະໜາມໄມ້).

*ການແຍກວັດຖຸດິບ:*

CoC 13: ອົງການຈັດຕັ້ງ ຕ້ອງເກັບຮັກສາວັດຖຸດິບທີ່ໄດ້ກວດສອບແລ້ວໃຫ້ຢູ່ຕ່າງຫາກໃນບ່ອນປອດໄພ ໃນໄລຍະ ທີ່ໄດ້ຮັບ, ປຸງແຕ່ງ, ເກັບມ້ຽນ, ແລະຂົນສົ່ງ

CoC 14: ວັດຖຸດິບທັງໝົດທີ່ບໍ່ສາມາດກຳນົດໄດ້ວ່າໄດ້ກວດສອບແລ້ວ ຕ້ອງແຍກອອກຈາກ ວັດຖຸດິບທີ່ໄດ້ກວດສອບ. ໝາຍເຫດ:ວັດຖຸດິບທີ່ບໍ່ມີຫລັກຖານທາງກົດໝາຍພຽງພໍ ຕ້ອງແຍກອອກຕ່າງຫາກ ຈົນກົ່ວຈະໄດ້ຮັບເອກະສານຕ່າງໆຢ່າງພຽງພໍ.

CoC 15: ອົງການຈັດຕັ້ງຕ້ອງນຳໃຊ້ ເຄື່ອງໝາຍພິເສດ(ເຊັ່ນ:ລະຫັດການກວດສອບ) ເພື່ອຈຳແນກຜະລິດຕະພັນວ່າໄດ້ກວດສອບແລ້ວໃນໄລຍະການ ປຸ່ງແຕ່ງ ແລະຂົນສົ່ງ. .

CoC 16: ອົງການຈັດຕັ້ງຕ້ອງພັດທະນາແລະຈັດຕັ້ງປະຕິບັດວິທີການຕ່າງໆ ເພື່ອຮັບປະກັນວ່າການຢັ້ງຢືນຂອງ ອົງກອນກວດສອບອື່ນ, ເຄື່ອງໝາຍ ຫລື ລະຫັດ ແມ່ນສາມາດຈຳແນກຄວາມແຕກຕ່າງໄດ້ຈາກ ອັນທີ່ໃຊ້ ຈຳແນກວັດຖຸດິບທີ່ໄດ້ກວດສອບຂອງ SmartWood.

CoC 17: ອົງການຈັດຕັ້ງຕ້ອງບໍ່ປະສົມວັດຖຸດິບທີ່ໄດ້ກວດສອບແລ້ວ ແລະວັດຖຸດິບທີ່ບໍ່ໄດ້ກວດສອບເຂົ້າກັນ ໃນການປຸງແຕ່ງ; ພຽງແຕ່ຜະລິດຕະພັນ ທີ່ບັນຈຸ ວັດຖຸດິບທີ່ໄດ້ກວດສອບແລ້ວ 100%ເທົ່ານັ້ນ (ຫລື ວັດຖຸດິບທີ່ໄດ້ກວດ

ສອບ ຫລື ໄດ້ຢັ້ງຢືນ ຕາມມາດຖານທີ່ເທົ່າທຽມກັນ ຫລື ຕາມມາດຖານລະດັບທີ່ສູງກົ່ວທີ່ SmartWoodໄດ້ຮັບຮອງ) ຈື່ງສາມາດເລືອກການຢັ້ງຢືນ ຂອງ SmartWood ໄດ້.

CoC 18: ຖ້າວັດຖຸດິບທີ່ໄດ້ກວດສອບ ໂດຍ VLO ຫລື VLC ໄປປະສົມກັບ ວັດຖຸທີ່ໄດ້ກວດສອບ ຫລື ຢັ້ງຢືນ ຕາມມາດຖານທີ່ເທົ່າທຽມກັນ ຫລື ຕາມມາດຖານລະດັບທີ່ສູງກົ່ວ ທີ່ SmartWoodໄດ້ຮັບຮອງ, ອົງການຈັດຕັ້ງດັ່ງກ່າວ ຕ້ອງນຳໃຊ້ການຢັ້ງຢືນການກວດສອບໃນລະດັບທີ່ຕໍ່າສຸດ ໃນຈຳນວນທັງໝົດຂອງຜະລິດຕະພັນປະສົມ.

*ມາດຖານການໄດ້ຮັບ ແລະ ການຊື້:*

CoC 19: ອົງການຈັດຕັ້ງຕ້ອງກວດສອບ ອາຍຸການຢັ້ງຢືນ ຫລື ໃບຢັ້ງຢືນຂອງຜູ້ສະໜອງ.

CoC 20: ອົງການຈັດຕັ້ງ ຕ້ອງກວດສອບ ວ່າ ວັດຖຸດິບ ທີ່ໄດ້ຊື້ ແລະໄດ້ຮັບຖືກຕ້ອງກັບປະເພດການຢັ້ງຢືນທີ່ໄດ້ລະບຸໄວ້.

*ມາດຖານການປຸງແຕ່ງ:*

CoC 21: ອົງການຈັດຕັ້ງ ຕ້ອງນຳໃຊ້ລະບົບກວດກາກັບຄືນ ແລະ ການບັນທຶກການຜະລິດ ເພື່ອປະກອບເອກະສານການຜະລິດຈາກ ວັດຖຸດິບທີ່ໄດ້ກວດສອບ.

CoC 22: ອົງການຈັດຕັ້ງ ຕ້ອງຮັບປະກັນວ່າ ແຕ່ລະການປຸງແຕ່ງທີ່ບໍ່ໄດ້ຢູ່ໃນເຂດ(ຢູ່ນອກບໍລິສັດ) ທີ່ເປັນເຂດສັນຍາຍ່ອຍ ຕ້ອງປະຕິບັດຕາມ ຂັ້ນຕອນ ຂອງ CoC ແລະ ຕ້ອງມີການເຊັນສັນຍາ ກ່ຽວກັບການສະໜອງວັດຖຸດິບຈາກແຫລ່ງ ອື່ນ/ເຂດອື່ນ(outsourcing).

*ມາດຖານການຂົນສົ່ງ ແລະ ການຂາຍ:*

CoC 23: ອົງການຈັດຕັ້ງ ຕ້ອງສັງລວມຂໍ້ມູນການຢັ້ງຢືນ ກ່ຽວກັບ ເອກະສານ ການຂາຍ ແລະການຂົນສົ່ງ ຊຶ່ງ ລວມ ມີ:

a. ການພັນລະນາຜະລິດຕະພັນທີ່ໄດ້ກວດສອບໂດຍ SmartWood (“SW VLO” ຫລື “SW VLC”);

b. ປະລິມານ/ບໍລິມາດ ແລະຊະນິດພັນສຳຫລັບແຕ່ລະຜະລິດຕະພັນ;

c. ລະຫັດກວດສອບ ຂອງ SmartWood (SW VLO XXXXXX ຫລື SW VLCXXXXXX).

## *ມາດຖານການຢັ້ງຢືນ ແລະ ຂໍ້ມູນທົ່ວໄປ*

CoC 24: ອົງການຈັດຕັ້ງຕ້ອງມີ ຂັ້ນຕອນປະຕິບັດ ເພື່ອຮັບປະກັນວ່າ ເຄື່ອງໝາຍ ແລະ ການຢັ້ງຢືນ ການກວດສອບ VLO ຫລື VLC ທັງໝົດໄດ້ປະຕິບັດຕາມ ນະໂຍບາຍຂອງ SmartWood:

a. ຫ້າມຕິດສະຫລາກເຄື່ອງໝາຍໃສ່ຜະລິດຕະພັນ;

b. ການນຳໃຊ້ເຄື່ອງໝາຍກວດສອບຂອງພັນທະມິດປ່າຊຸ່ມຊື່ນ( Rainforest Alliance ) ຈະອະນຸຍາດໃຫ້ໃຊ້ຮ່ວມກັບການຢັ້ງຢືນການ ກວດສອບທີ່ໄດ້ຜ່ານເງື່ອນໄຂ ແລະໄດ້ຮັບຮອງແລ້ວ;

c. ການນຳໃຊ້ລະຫັດກວດສອບ (SW VLOXXXXXX ຫລື SW VLCXXXXXX) ໃສ່ກັບຜະລິດຕະພັນແມ່ນຈະໃຊ້ເພື່ອການກວດກາກັບຄືນແຫລ່ງທີ່ມາ ຂອງຜະລິດຕະພັນເທົ່ານັ້ນ; ແລະ

d. ການນຳໃຊ້ ເຄື່ອງໝາຍການກວດສອບ ຂອງ Rainforest Alliance ໃນການສົ່ງເສີມການກວດສອບ ຂອງ ອົງການຈັດຕັ້ງ ບໍ່ໄດ້ໝາຍຄວາມວ່າຈະລວມເອົາທຸກໆລັກສະນະ ທີ່ຢູ່ນອກກອບຂອງການປະເມີນ ຜົນ.

CoC 25: ອົງການຈັດຕັ້ງຕ້ອງມີຂັ້ນຕອນປະຕິບັດ ເພື່ອຮັບປະກັນ ການນຳສະເໜີການຢັ້ງຢືນຂອງ Rainforest Alliance/SmartWood ຫາ SmartWood ເພື່ອທົບທວນຄືນ ແລະຮັບຮອງ ກ່ອນຈະນຳໃຊ້.

CoC 26: ອົງການຈັດຕັ້ງຕ້ອງມີຂັ້ນຕອນປະຕິບັດ ແລະ ສະແດງໃຫ້ເຫັນການທົບທວນຄືນ ແລະ ການຮັບຮອງ ຈາກ SmartWood ໂດຍ ການຢັ້ງຢືນການກວດສອບ ໄດ້ຮັກສາໄວ້ໃນ ແຟ້ມເອກະສານຢ່າງນ້ອຍ 5 ປີ.

**ມາດຖານການຄຸ້ມຄອງຫລາຍເຂດ (Multi-site criteria):**

*ມາດຖານຕ່ອງໂສ້ການຄຸ້ມຄອງ(CoC) ຫລາຍເຂດ ໄດ້ພັດທະນາຂື້ນເພື່ອອຳນວຍຄວາມສະດວກ ໃຫ້ການປະເມີນຜົນ CoC ສຳຫລັບ ອົງການຈັດຕັ້ງ ທີ່ມີຈຳນວນເຂດຜະລິດ/ເຂດບໍລິສັດ ຫລາຍເຂດ ຫລື ນິຕິບຸກຄົນທີ່ມີສ່ວນຮ່ວມ (ຈາກນີ້ ເອີ້ນວ່າ "ເຂດ") ທີ່ລວມຢູ່ໃນກອບຂອງຕ່ອງໂສ້ການສະໜອງ. ເງື່ອນໄຂ ການຄຸ້ມຄອງຫລາຍເຂດ, ບວກກັບ ການສື່ສານ ກັບ SmartWood, ຕ້ອງແມ່ນຜູ້ທີ່ຖືໃບຢັ້ງຢືນການກວດສອບເປັນຜູ້ປະສານງານ. ມາດຖານຫລາຍເຂດຈະອະນຸຍາດໃຫ້ SmartWood ປະເມີນຜົນ ເຂດທີ່ມີສ່ວນຮ່ວມ ອີງຕາມການສຸ່ມຕົວຢ່າງໃນການກວດສອບ ເພື່ອຮັບຮູ້ ການຄວບຄຸມ ແລະ ລະບົບລາຍງານ ທີ່ຜູ້ຖືໃບຢັ້ງຢືນການກວດສອບໄດ້ຕິດຕາມກວດກາ. ນອກຈາກມາດຖານເຫລົ່ານີ້, SmartWood ຕ້ອງ ຮັບປະກັນໄດ້ວ່າ ທຸກໆເຂດ ໃນຕ່ອງໂສ້ການສະໜອງ ໄດ້ເຮັດຕາມເງື່ອນໄຂ ທີ່ກ່ຽວຂ້ອງທັງໝົດ ໃນ ມາດຖານການກວດ ສອບ VLO/VLC.*

<u>ຄວາມຮັບຜິດຊອບ ແລະ ຂັ້ນຕອນໃນການສ້າງເອກະສານ</u>

CoC 27: ຜູ້ຖືເອກະສານການກວດສອບ ຕ້ອງແຕ່ງຕັ້ງ 1 ຄົນ (ຕຳແໜ່ງນຶ່ງ) ທີ່ຮັບຜິດຊອບລວມ ສຳຫລັບຄຸ້ມຄອງ ການຈັດຕັ້ງເຂດຕ່າງໆ ແລະ ການເຮັດຕາມເງື່ອນໄຂ ຂອງ SmartWood .

CoC 28: ຜູ້ຖືເອກະສານການກວດສອບຕ້ອງມີຂັ້ນຕອນປະກອບເອກະສານອ້າງອີງ,ຊຶ່ງກວມເອົາເງື່ອນໄຂຫລາຍເຂດ ຕາມມາດຖານນີ້.

<u>ການບັນທຶກ</u>

CoC 29: ຜູ້ຖືເອກະສານການກວດສອບຕ້ອງສາມາດເຂົ້າເຖິງ, ແລະ ສາມາດກວດກາຂໍ້ມູນຈາກເຂດຕ່າງໆ ເພື່ອ ສະໜອງໃຫ້ການກວດສອບປະຈຳປີ ຂອງ SmartWood ຕະຫລອດທັງ ຕາມການຮອງຂໍ.

CoC 30: ຜູ້ຖືເອກະສານການກວດສອບ ຕ້ອງຮັກສາບົດບັນທຶກ ຂອງເຂດຕ່າງໆທີ່ໄດ້ປັບປຸງຂໍ້ມູນແລະ ເກັບໄວ້ຢູ່ສ່ວນ ກາງ ລວມມີ:

a. <u>ບັນຊີເຂດຕ່າງໆ</u> ທີ່ຢູ່ໃນກອບ, ລວມທັງຊື່, ທີ່ຢູ່, ຜູ້ຄຸ້ມຄອງເຂດ, ວັນທີເຂົ້າຮ່ວມ, ແລະ ຖອນ ເມື່ອ ເວລາ ນຳໃຊ້;
b. <u>ແບບຟອມຍີນຍອມເຂົ້າຮ່ວມທີ່ໄດ້ເຊັນ</u> ສຳຫລັບທຸກໆເຂດ;
c. ການບັນທຶກທີ່ສະແດງໃຫ້ເຫັນ ກອບຂອງການປະເມີນຜົນ ໃນແຕ່ລະເຂດ;

d. <u>ຂໍ້ມູນສະຫລຸບສັງລວມບໍລິມາດ</u> ສຳຫລັບແຕ່ລະກຸ່ມຜະລິດຕະພັນ,ລວມທັງ ການຊື້, ການຜະລິດ ແລະ ການແປຮູບ, ການສຳຫລວດ,ແລະ ການຂາຍ ໃນແຕ່ລະເຂດ.

<u>ການກວດສອບ ແລະ ການຄຸ້ມຄອງເຂດ</u>

CoC 31: ເຂດທັງໝົດ ທີ່ຢູ່ໃນກອບການກວດສອບ ຕ້ອງໄດ້ເຊັນແບບຟອມຍືນຍອມເຂົ້າຮ່ວມ ຊຶ່ງລວມມີ:

a) ຂໍ້ຕົກລົງທີ່ຈະເຮັດຕາມຂໍ້ຜູກມັດ ແລະຄວາມຮັບຜິດຊອບຂອງການເຂົ້າຮ່ວມ ໃນການກວດສອບຫລາຍເຂດ ໃນຊ່ວງເວລາໃດນຶ່ງ ດັ່ງທີ່ໄດ້ອະທິບາຍ ໃນ ຂັ້ນຕອນຂອງຜູ້ຖືໃບກວດສອບ ແລະ ຂອງຂໍ້ຕົກລົງໃນການກວດສອບ VLO ຫລື VLC ຂອງ SmartWood ;

b) ຂໍ້ຕົກລົງທີ່ຈະເຮັດຕາມ ມາດຖານຂອງ SmartWood ທີ່ກ່ຽວຂ້ອງ ແລະ ຂໍ້ສະເໜີໃຫ້ແກ້ໄຂ (CARs) ທີ່ອອກໃຫ້ໂດຍ SmartWood ແລະ/ຫລືຜູ້ຖືໃບກວດສອບ.

CoC 32: ກ່ອນຈະຖືກຍອມຮັບໃຫ້ເປັນເຂດທີ່ຢູ່ພາຍໃຕ້ກອບການກວດສອບ, ຜູ້ກວດສອບທີ່ຖືກແຕ່ງຕັ້ງຈາກຜູ້ຖືໃບກວດສອບ ຕ້ອງດຳເນີນການກວດສອບເບື້ອງຕົ້ນໃນແຕ່ລະເຂດ ເພື່ອຮັບປະກັນວ່າ ແຕ່ລະເຂດໄດ້ເຮັດຕາມເງື່ອນໄຂຂອງມາດຖານການກວດສອບ ຂອງ SmatWood ແລ້ວ.

CoC 33: ຜູ້ກວດສອບທີ່ຖືກແຕ່ງຕັ້ງຈາກຜູ້ຖືໃບກວດສອບ ຕ້ອງດຳເນີນການກວດສອບປະຈຳປີໃນແຕ່ລະເຂດເພື່ອຢັ້ງຢືນການເຮັດຕາມເງື່ອນໄຂ ຂອງມາດຖານການກວດສອບ ຂອງ SmatWood ຢ່າງຕໍ່ເນື່ອງ.

CoC 34: ເມື່ອພົບເຫັນການບໍ່ເຮດຕາມ ໃນຊ່ວງກວດສອບພາຍໃນ, ຜູ້ຖືໃບກວດສອບຕ້ອງອອກ ຂໍ້ສະເໜີໃຫ້ແກ້ໄຂ (CARs)ໃຫ້ເຂດຕ່າງໆປະຕິບັດ.

CoC 35: ຜູ້ຖືໃບກວດສອບຕ້ອງສະໜອງ ບົດລາຍງານປະຈຳປີ ກ່ຽວກັບຜົນການກວດສອບພາຍໃນທັງໝົດ.

## ພາກ II: ໃບກວດສອບ, ການລາຍງານ ແລະ ການກວດສອບ

### 1. ໃບກວດສອບ (Verification Statement)

SmartWood ຈະສະໜອງໃຫ້ອົງການຈັດຕັ້ງໃດນຶ່ງ ທີ່ໄດ້ຖືກກວດສອບສຳແລ້ວ ແລະ ໄດ້ເຮັດຕາມມາດຖານນີ ເພື່ອ ສື່ສານຂໍ້ຄວາມດັ່ງກ່າວໃນຮູບແບບໃບກວດສອບ ທີ່ SmartWood ອອກໃຫ້. ໃບກວດສອບຈະກຳນົດຄ້າຍກັບໃບຢັ້ງຢືນ ອີງຕາມ ກອບຂອງການກວດສອບ, ອາຍຸການໃຊ້ງານ,ແລະ ຂໍ້ມູນທີ່ຈຳເປັນອື່ນໆ.

ໃບກວດສອບລວມມີຂໍ້ມູນຕ່າງໆດັ່ງຕໍ່ໄປນີ້:

- ບໍລິສັດ,ຜູ້ຊື້, ຫລື ຊື່ຂອງຕົວແທນ ແລະ ລາຍລະອຽດ ຂອງບ່ອນຕິດຕໍ່ພົວພັນ;
- ລະຫັດກວດສອບ;
- ອາຍຸການຂອງໃບກວດສອບ;
- ປະເພດຜະລິດຕະພັນປ່າ;
- ທີ່ຕັ້ງ ແລະ ສະພາບທາງກົດໝາຍຂອງຜູ້ສະໜອງ,
- ອະທິບາຍຫຍໍ້ເຂດທີ່ໄດ້ເຂົ້າຮ່ວມ ໃນກໍລະນີ ການກວດສອບຫລາຍເຂດ.

### 2. ການລາຍງານ

SmartWood ຈະສະໜອງການລາຍງານທີ່ສະຫລຸບຫຍໍ້ຂໍ້ມູນຕ່າງໆແກ່ສາທາລະນະ ກ່ຽວກັບ ບໍລິສັດທີ່ໄດ້ກວດສອບ ແລະ ສິ່ງທີ່ການກວດສອບໄດ້ກວມເອົາ. ຂໍ້ມູນທີ່ສະຫລຸບຫຍໍ້ແກ່ສາທາລະນະຈະຮັກສາໄວ້ ແລະຕິດໄວ້ໃນ website ຂອງ SmartWood. ໃບກວດສອບຈະມີຢູ່ປະຈຳ ໃນ website ຖ້າຕ້ອງການອ່ານ. ການກວດສອບທາງກົດໝາຍ ຕ້ອງເຮັດເປັນ ເອກະສານອ້າງອີງ ແລະ ຕ້ອງມີ ບົດລາຍງານການກວດສອບ ແລະ ໃບກວດສອບ ຂອງSmartWood ຕິດຄັດນຳ.

### 3. ການກວດສອບ

SmartWood ຈະພິຈາລະນາ ຄວາມຖີ່ ແລະ ກອບ ຂອງການ ຕິດຕາມກວດສອບ ໃນການນຳໃຊ້ມາດຖານນີ້, ໂດຍມີ ຄວາມຖີ່ 6 ເດືອນ. ການ ຕິດຕາມກວດສອບ (ເຊັ່ນ:. ການກວດສອບໃນທຸກໆ 6 ເດືອນ) ອາດຈະເຮັດຢູ່ໃນຫ້ອງການ. SmartWood ຈະສະໜອງຄຳແນະນຳ ກ່ຽວກັບ ຄວາມຖີ່ໃນການກວດສອບ ແລະ ນິຕິບຸກຄົນໃດຕ້ອງຖືກກວດສອບ ພາຍ ໃນ ຂັ້ນຕອນການປະເມີນຜົນການກວດສອບຂອງ SmartWood.

**ພາກ III: ນະໂຍບາຍການບໍລິການ ການກວດສອບ (Verification Service Policies)**

ນະໂຍບາຍຂອງSmartWood ທີ່ກ່ຽວພັນກັບ VLO/VLC:

1. SmartWood ສະຫງວນສິດ ທີ່ຈະປະຕິເສດການສະໜອງVLO/VLC ໃຫ້ລູກຄ້າ ເມື່ອເຫັນວ່າ ສະມາຄົມດັ່ງກ່າວອາດຈະສ້າງຄວາມເສັຍຫາຍໃຫ້ ຊື່ສຽງຂອງ SmartWood. ການຕັດສິນໃຈຈະອີງໃສ່ ການວິເຄາະເບິ່ງກິດຈະກຳ ຂອງ ອົງການຈັດຕັ້ງດັ່ງກ່າວ ແລະ ເອກະສານຕ່າງໆ ຂອງເຂດຜະລິດ ແລະ/ຫລື ນິຕິບຸກຄົນ ພາຍໃນການຄຸ້ມຄອງຂອງມັນ, ທັງສອງຢ່າງທີ່ກ່ຽວຂ້ອງກັບເຂດ ທີ່ລວມໃນກອບການກວດສອບ ຕະຫລອດທັງບໍລິສັດອື່ນໆທີ່ເປັນເຈົ້າຂອງ ຫລື ຄຸ້ມຄອງ ບັນດາບໍລິສັດ ຫລື ເຂດຜະລິດຕ່າງໆ.
2. SmartWood ຈະບໍ່ສະໜອງ ການກວດສອບ VLO ຫລື VLC ໄມ້ ຫລື ຜະລິດຕະພັນໄມ້ ທີ່ມີແຫລ່ງທີ່ມາຈາກການຫັນປ່ຽນປ່າທຳມະຊາດ ມາປູກປ່າ ຫລື ມາເປັນການນຳໃຊ້ທີ່ດິນແບບອື່ນ, ເຖິງວ່າ ເຈົ້າໜ້າທີ່ ທີ່ກຳນົດລະບຽບການຂອງທ້ອງຖິ່ນ ຈະຖືວ່າ ການຖາງປ່າທຳມະຊາດຖືກຕ້ອງຕາມກົດໝາຍກໍຕາມ.
3. SmartWood ຕ້ອງການໃຫ້ລູກຄ້າ ທີ່ໄດ້ກວດສອບຕາມມາດຖານ VLO ຫລື VLC ປະຕິບັດຈິງຈັງ ໃນການທີ່ໄດ້ຮັບການປະຕິບັດງານ ໃນລະດັບສູງ ແລະ ໃຫ້ສູ້ຊົນ ເພື່ອບັນລຸ ການຈັດສັນຄຸ້ມຄອງປ່າແບບຍືນຍົງ ແລະການຢັ້ງຢືນຂອງ FSC ໃຫ້ເປັນແຫລ່ງສະໜອງໄມ້. SmartWood ອາດພິຈາລະນາ ເພື່ອກຳນົດເວລາ ໃນຊ່ວງທີ່ໃຫ້ການບໍລິການ ການກວດສອບ ພຽງ 3 ປີ; ຖ້າ ພົບເຫັນວ່າ ລູກຄ້າ ບໍ່ປະຕິບັດຖືກຕ້ອງ ເພື່ອກ້າວໄປສູ່ ການຢັ້ງຢືນໃນລະດັບສູງ ຫລື ໃນການກຳນົດແຫລ່ງທີ່ໄດ້ຢັ້ງຢືນ. ການຕັດສິນວ່າຈະສືບຕໍ່ການບໍລິການໃນການກວດສອບຫລືບໍ່ ຈະອີງໃສ່ ການປະເມີນຜົນກິດຈະກຳຂອງການຈັດຕັ້ງ ທີ່ຈະບັນລຸການຢັ້ງຢືນໃນຂັ້ນສູງກໍ່ວ. ອີງຕາມຄວາມຄືບໜ້າ ແລະ ປະເພດຂອງການຈັດຕັ້ງ(ຜູ້ປະກອບການໃນ ການຈັດສັນຄຸ້ມຄອງປ່າ ຫລື ໂຮງງານອຸດສະຫະກຳ); SmartWood ອາດຈະຂໍຮ້ອງໃຫ້ ການຈັດຕັ້ງດັ່ງກ່າວ ເຂົ້າສູ່ ໂຄງການ SmartStep ຫລື ກ້າວໄປຫາ ການກວດສອບໃນລະດັບສູງ.
4. SmartWood ຈະອະນຸຍາດວັດຖຸ ຫລື ຜະລິດຕະພັນທີ່ໄດ້ກວດສອບ ເປັນ VLO ຫລື VLC ໃຫ້ເປັນສ່ວນນຶ່ງຂອງຕ່ອງໂສ້ການສະໜອງຕາມລະບົບຄວບຄຸມ COC ທີ່ໄດ້ກວດສອບຈາກອົງກອນຢັ້ງຢືນອື່ນ ໄດ້ ກໍຕໍ່ເມື່ອວ່າ SmartWood ໄດ້ຮັບຮອງລະບົບທີ່ໄດ້ກ່າວມາ (ໃຫ້ຕິດຕໍ່ຫາ SW ສຳຫລັບຂໍ້ມູນ ກ່ຽວກັບ ວ່າມີລະບົບໃດໄດ້ຖືກຮັບຮອງເປັນທາງການແລ້ວ).
5. SmartWood ຕ້ອງການເຂົ້າເຖິງເຂດທັງໝົດ ທັງໝົດ ເພື່ອກວດສອບ ນິຕິບຸກຄົນ ທີ່ລວມຢູ່ໃນກອບ ຕ່ອງໂສ້ການສະໜອງ ທີ່ໄດ້ກວດສອບແລ້ວ ເຖິງວ່າສິ່ງເຫລົ່ານີ້ ຈະບໍ່ໄດ້ຢູ່ໃນຄວາມເປັນເຈົ້າຂອງໂດຍກົງ ຂອງຜູ້ຖືໃບກວດສອບກໍຕາມ. ຖ້າປະຕິເສດບໍ່ໃຫ້ ຜູ້ກວດສອບ ເຂົ້າຫາເຂດຜະລິດໃດນຶ່ງ, ສະຖານທີ່ໃດນຶ່ງ ຫລື ເອກະສານຕ່າງໆ; ເຂດດັ່ງກ່າວຕ້ອງຖືກຖອນອອກຈາກກອບການກວດສອບທັນທີ. ຖ້າຜູ້ຖືໃບກວດສອບ ໃຫ້ຂໍ້ຈຳກັດຕໍ່ຜູ້ກວດສອບ; ເອກະສານການກວດສອບທັງໝົດຈະຊື້ນສຸດລົງ ແລະເປັນໂມຄະທັນທີ.
6. ສິດຕາມປະເພນີຈະຖືເປັນ ສ່ວນທີ່ສຳຄັນທີ່ສຸດໃນການກວດສອບທາງກົດໝາຍ ແລະ ຫວັງວ່າ ຜູ້ສະມັກທີ່ຈະໃຫ້ມີການກວດສອບທາງກົດໝາຍ ໄດ້ກຳນົດ ແລະຮັບຮູ້ການຖືຄອງ ແລະສິດຕາມປະເພນີແລ້ວ ໂດຍສະເພາະ ອັນທີ່ໄດ້ນຳໃຊ້ ແລະໄດ້ຮັບຮອງທາງກົດໝາຍ. ໃນກໍລະນີ ບ່ອນທີ່ການຖືຄອງຕາມປະເພນີ ຖືເປັນບັນຫາທີ່ສຳຄັນ, SW ອາດຈະເລືອກ ເພື່ອດຳເນີນການປຶກສາຫາລື ກັບຜູ້ທີ່ກ່ຽວຂ້ອງ ໃນເລື່ອງທີ່ກ່ຽວພັນກັບ ການປະເມີນຜົນການກວດສອບ.

7. ພັນທະມິດປ່າຊຸ່ມຊື່ນ (Rainforest Alliance) ຈະພິຈາລະນາ ເພື່ອກຳນົດ ການນຳໃຊ້ ຊື່ຂອງ Rainforest Alliance ແລະ/ຫລື SmartWood, ເຄື່ອງໝາຍກວດສອບ ຫລື ກາ ສຳຫລັບ ການສື່ສານທາງ ທຸລະກິດ ທາ ທຸລະກິດ.

**ບົດແນບທ້າຍ 1: ອະທິບາຍຄໍາສັບ**

(ChainofCustody (CoC)): **ຕ່ອງໂສ້ການຄຸ້ມຄອງ**

ສໍາຫລັບໂຮງງານອຸດສະຫະກໍາໄມ້; CoC ແມ່ນເສັ້ນທາງຂົນຍ້າຍວັດຖຸດິບ ຈາກປ່າໄມ້ເຖິງຜູ້ຊົມໃຊ້ ລວມທັງການປຸງແຕ່ງແຕ່ລະໄລຍະ, ການຖ່າຍໂອນ,ແລະ ການຈໍາໜ່າຍ ຕາມລໍາດັບ. ສໍາຫລັບ ວັດຖຸປະສົງ ຂອງ ມາດຖານ CoC ທົ່ວໄປຂອງ SmartWood, CoC ຈະອີງໃສ່ ລະບົບຈັດການ ແລະ ກວດກາແຫລ່ງທີ່ມາ ໃນການນໍາໃຊ້ວັດຖຸສະເພາະຈາກ ຈຸດ ຊື້ ຫາ ຈຸດຂົນສົ່ງ ແລະຂາຍ ຂອງອົງການຈັດຕັ້ງທີ່ຖືກກວດສອບ.

CITES: ສົນທິສັນຍາວ່າດ້ວຍການຄ້າຂາຍຊະນິດພັນພືດ ແລະ ສັດທີ່ໃກ້ຈະສູນພັນ.

Claim Category: **ປະເພດການຢັ້ງຢືນ**

ປະເພດການຢັ້ງຢືນ ຫລື ການກວດສອບ ທີ່ນໍາໃຊ້ກັບວັດຖຸ/ຜະລິດຕະພັນ ທີ່ຖືກກວດກາຫາແຫລ່ງທີ່ມາ ພາຍໃນລະບົບຄວບຄຸມ CoC .

Controlled Wood (CW) : **ໄມ້ທີ່ໄດ້ຄວບຄຸມແຫລ່ງທີ່ມາ**

ແມ່ນໄມ້ທີ່ບໍ່ໄດ້ມາຈາກ ຫ້າປະເພດແຫລ່ງທີ່ມາ:ໄມ້ທີ່ຂຸດຄົ້ນໂດຍລະເມີດສິດປະຊາຊົນ ແລະສິດຕາມປະເພນີ, ໄມ້ທີ່ຂຸດຄົ້ນຈາກປ່າບ່ອນທີ່ ບັນດາຄຸນຄ່າທາງການອະນຸລັກສູງ ຖືກໄພຂົ່ມຂູ່, ໄມ້ທີ່ໄດ້ດັດແປງພັນທຸກໍາ, ໄມ້ທີ່ຂຸດຄົ້ນຜິດກົດໝາຍ ແລະ ໄມ້ຈາກເຂດທີ່ຫັນປ່ຽນປ່າທໍາມະຊາດໄປປູກປ່າ ຫລື ເປັນການນໄຊ້ອື່ນໆ.

Corrective Action Request (CAR): **ຂໍ້ສະເໜີໃຫ້ແກ້ໄຂ**

ການປະຕິບັດເພື່ອແກ້ໄຂການບໍ່ເຮັດຕາມທີ່ໄດ້ກໍານົດໃນການປະເມີນຜົນ,ກວດສອບ, ຫລື ຫລັກຖານທີ່ ປາກົດໃນແຕ່ລະຈຸດ. CARs ຈະລວມມີ ກໍານົດເວລາ ໃນການເຮັດສໍາເລັດ. ໝາຍເຫດ: ຖ້າພາດທີ່ ຈະປິດ/ສໍາເລັດການແກ້ໄຂ CARs ໃນເວລາທີ່ກໍານົດໃຫ້ ໝາຍເຖິງການຖອນ ຫລື ຊື້ນສຸດໃບກວດສອບ.

Customary Use Right: **ສິດຕາມປະເພນີ**

ແມ່ນສິດທີ່ສົ່ງຜົນຈາກການກະທໍາທາງປະເພນີ ຫລື ທາງຄວາມຊື້ນເຄີຍທີ່ຍາວນານ, ສືບທອດຢ່າງຕໍ່ເນື່ອງໂດຍການສືບທອດຊໍ້າແລ້ວຊໍ້າອີກ ແລະໂດຍການຍົນຍອມທີ່ຈະບໍ່ໃຫ້ຖືກລົບກວນ ຊຶ່ງຕ້ອງການການບັງຄັບໃຊ້ທາງກົດໝາຍ ພາຍໃນສັງຄົມ ຫລື ພູມສັນຖານໃດນຶ່ງ.

Documented Control System (DCS): **ລະບົບຄວບຄຸມທາງເອກະສານ**

ຂັ້ນຕອນສໍາຫລັບຈັດການ ແລະກວດກາແຫລ່ງທີ່ມາ ສໍາຫລັບ ວັດຖຸທີ່ໄດ້ກວດສອບ VLO ຫລື VLC.

Forest Gate: **ປະຕູປ່າ**

ຈຸດທີ່ກໍານົດສໍາຫລັບປ່ຽນຄວາມເປັນເຈົ້າຂອງທາງກົດໝາຍ ຂອງ ໄມ້ທ່ອນທີ່ໄດ້ຂຸດຄົ້ນໃນເຂດຄຸ້ມຄອງ ໄປສູ່ນິຕິບຸກຄົນທີ່ເປັນເຈົ້າຂອງທີສອງ. ອັນນີ້ອາດຈະແມ່ນຈຸດຕັດປໍ້າ (ໄມ້ຢືນຕົ້ນ ຫລືຕໍໄມ້), ສະໜາມໄມ້, ຫລື ຈຸດອື່ນໆທີ່ກໍານົດໄວ້).

Forest Management Enterprise (FME): **ຜູ້ປະກອບການຈັດສັນຄຸ້ມຄອງປ່າ**

ອົງການຈັດຕັ້ງ ຫລື ນິຕິບຸກຄົນ ທີ່ຈັດສັນຄຸ້ມຄອງປ່າ. ຜູ້ປະກອບການຈັດສັນຄຸ້ມຄອງປ່າອາດຈະຮັບຜິດຊອບການຈັດສັນຄຸ້ມຄອງປ່ານີ້ງຫລື ຫລາຍເຂດ.

**Forest Management Unit (FMU): ໜ່ວຍ (ເຂດ) ຄຸ້ມຄອງປ່າ**

ແມ່ນເຂດປ່າທີ່ໄດ້ກຳນົດຂອບເຂດຈະແຈ້ງໃນແຜນທີ່, ຊຶ່ງຄຸ້ມຄອງໂດຍອົງກອນຈັດສັນຄຸ້ມຄອງນີ້ງ. ອັນນີ້ຈະອີງໃສ່ເນື້ອທີ່ປ່າຂະໜາດນ້ອຍ ທີ່ຄຸ້ມຄອງໂດຍສ່ວນບຸກຄົນ ເຊັ່ນກັນ.

ILO: ອົງການແຮງງານສາກົນ

ILO Fundamental Conventions: ສົນທິສັນຍາພື້ນຖານ ຂອງ ອົງການແຮງງານສາກົນ

View the text via this link.

**Legality verification: ການກວດສອບທາງກົດໝາຍ**

ແມ່ນການກວດສອບແຫລ່ງວັດຖຸດິບທີ່ເຮັດຕາມກົດໝາຍ, ຊຶ່ງອາດຈະແມ່ນ ການກວດສອບການຂຸດຄົ້ນທີ່ຖືກກົດໝາຍ, ການຄ້າທີ່ຖືກກົດໝາຍ, ຫລື ສິດທາງກົດໝາຍໃນການຂຸດຄົ້ນ.

**Legally Harvested: ການຂຸດຄົ້ນຖືກກົດໝາຍ**

ວັດຖຸດິບທີ່ຂຸດຄົ້ນ

- ອີງຕາມສິດທາງກົດໝາຍໃນການຂຸດຄົ້ນໄມ້ ໃນເຂດຈັດສັນຄຸ້ມຄອງປ່າ ບ່ອນທີ່ໄມ້ເກີດ,
- ການເຮັດຕາມກົດໝາຍຂອງຊາດ ແລະຂອງທ້ອງຖິ່ນ ທີ່ຄວບຄຸມ ການຈັດສັນຄຸ້ມຄອງ ແລະ ການຂຸດຄົ້ນ.

**Legally Traded: ການຄ້າຖືກກົດໝາຍ**

ໄມ້, ຫລື ຜະລິດຕະພັນ ທີ່ເຮັດຈາກໄມ້, ທີ່:

- ສົ່ງອອກ ໂດຍເຮັດຕາມ ກົດໝາຍສົ່ງອອກ ໄມ້ ແລະ ຜະລິດຕະພັນໄມ້ ຂອງປະເທດນັ້ນ, ລວມມີ ການຈ່າຍຄ່າພາສີສົ່ງອອກ,ຫລື ອາກອນຕ່າງໆ.
- ນຳເຂົ້າ ໂດຍເຮັດຕາມກົດໝາຍນຳເຂົ້າ ໄມ້ ແລະ ຜະລິດຕະພັນໄມ້ ຂອງປະເທດນັ້ນ, ລວມມີ ການຈ່າຍຄ່າພາສີ ນຳເຂົ້າ,ຫລື ອາກອນຕ່າງໆ ຫລື ບໍ່ຂັດກັບກົດໝາຍສົ່ງອອກ ຂອງປະເທດ;
- ຄ້າຂາຍ ໂດຍເຮັດຕາມ ກົດໝາຍ ທີ່ກ່ຽວພັນກັບ CITES,

**Legal Right to Harvest : ສິດຂຸດຄົ້ນທາງກົດໝາຍ**

ແມ່ນການອະນຸດຍາດໃຫ້ຂຸດຄົ້ນເຂດຄຸ້ມຄອງປ່າ:

- ຈາກຊັບພະຍາກອນຂອງຜູ້ປັນເຈົ້າຂອງ;

- ພາຍໃຕ້ອະນຸຍາດທີ່ຍັງໃຊ້ການໄດ້ ອີງຕາມກົດໝາຍ ແລະ ລະບຽບການທີ່ຄຸ້ມຄອງການຈັດສັນແລະການຂຸດຄົ້ນຊັບພະຍາກອນປ່າ.

**Organization: ອົງການຈັດຕັ້ງ**

ອາດຈະແມ່ນບໍລິສັດ ຫລື ຜູ້ປະກອບການຈັດສັນຄຸ້ມຄອງປ່າ.

**Outsourcing: ແຫລ່ງພາຍນອກ**

ການປຸງແຕ່ງທີ່ໄດ້ ເຮັດເປັນສັນຍາຍ່ອຍ ຫລື ການບໍລິການ ໃນການຈັດການອື່ນໆ ໂດຍເຮັດຢູ່ນອກເຂດ.

**Product group: ກຸ່ມຜະລິດຕະພັນ**

ຜະລິດຕະພັນ ຫລື ກຸ່ມຜະລິດຕະພັນທີ່ ອົງການຈັດຕັ້ງໄດ້ລະບຸ, ຊຶ່ງ ໃຊ້ເປັນ ສິ່ງນໍາເຂົ້າ ຮ່ວມກັນ ເພື່ອຈຸດປະສົງຂອງ COC ແລະການຕິດເຄື່ອງໝາຍ.

**Resource owner: ເຈົ້າຂອງຊັບພະຍາກອນ**

ຜູ້ຖືສິດນໍາໃຊ້ໃນເນື້ອທີ່ດິນ ແລະ/ຫລືຕົ້ນໄມ້ ໃນເຂດຄຸ້ມຄອງປ່າ, ລວມທັງສິດທີ່ຮັບຮູ້ທາງກົດໝາຍ ອີງໃສ່ ສິດຕາມປະເພນີ.

**Set of sites: ກຸ່ມເຂດຜະລິດ**

ແມ່ນເຂດຜະລິດ ຕ່າງໆ ທີ່ຜະລິດ ຫລື ຈັດການ ຜະລິດຕະພັນທີ່ຄືກັນ, ອີງຕາມວິທີການ ຫລື ຂັ້ນຕອນອັນດຽວກັນ ຕົວຢ່າງ: ຜູ້ສະມັກໃຫ້ມີການກວດສອບຫລາຍເຂດ ໄດ້ຮັບວັດຖຸ ຈາກ 10 ເຂດທີ່ເຂົ້າຮ່ວມ: ຈາກ ຜູ້ປະກອບການຈັດສັນຄຸ້ມຄອງປ່າ 2 ແຫ່ງ, ໂຮງເລື່ອຍ 4 ໂຮງ, ແລະ ໂຮງງານປຸງແຕ່ງໄມ້ 4 ໂຮງ. ກອບການກວດສອບ ຕ້ອງລວມເອົາ 3 ໝວດເຂດຜະລິດ. SmartWood ຈະກວດກາວ່າ ຜະລິດຕະພັນມາຈາກແຫລ່ງໃດ ຫລື ໄດ້ຈັດການໃນ ທຸກໆເຂດຕາມວິທີການແລະຂັ້ນຕອນອັນດຽວກັນ. ອັນນີ້ ຈະເຮັດໃຫ້ SmartWood ສາມາດພິຈາລະນາ ວ່າ ເຂດນັ້ນສາມາດແບ່ງອອກເປັນກຸ່ມໄດ້ ແນວໃດ.

**Site: ເຂດ/ເຂດຜະລິດ**

ອີງໃສ່ບໍລິສັດ/ບ່ອນຜະລິດ/ທຸລະກິດ ທີ່ລວມໃນກອບການກວດສອບ; ເຂດທີ່ໄດ້ເຂົ້າຮ່ວມອາດຈະ ຫລື ບໍ່ໄດ້ ຄອບຄອງໂດຍກົງ ໂດຍ ຜູ້ຖືໃບກວດສອບ. ເຂດທີ່ເຂົ້າຮ່ວມ ບໍ່ສາມາດຖື ໃບຢັ້ງຢືນໄດ້ໃນແຕ່ລະເຂດ, ແຕ່ເທົ່າທີ່ພວກເຂົາເຮັດຕາມເງື່ອນໄຂທັງໝົດໃນຂໍ້ຕົກລົງ ກັບຜູ້ຖືໃບກວດສອບ,ແລະ ກັບ ມາດຖານການກວດສອບຂອງ SmartWood, ຈະຖືກລວມເຂົ້າໃນກອບການກວດສອບສໍາຫລັບຫລາຍເຂດ. ເຂດທີ່ໄດ້ເຂົ້າຮ່ວມອາດຈະລວມເອົາ ຜູ້ປະກອບການຈັດສັນຄຸ້ມຄອງປ່າ, ເຂດປຸງແຕ່ງ, ແລະ ເຂດເກັບຮັກສາ. ເຂດທີ່ໄດ້ເຂົ້າຮ່ວມ ພາຍໃນການກວດສອບຕ່ອງໂສ້ການສະໜອງ ຂອງຫລາຍເຂດ ສາມາດແບ່ງອອກເປັນ ກຸ່ມເຂດໄດ້.

**SmartLogging:** ໂຄງການຢັ້ງຢືນ ຂອງ SmartWood ໃຫ້ຜູ້ຂຸດຄົ້ນ ທີ່ມີການປະເມີນຜົນ ສໍາຫລັບ ການປະຕິບັດຕາມມາດຖານການຂຸດຄົ້ນທີ່ດີທີ່ສຸດ, ຄຸນນະພາບຂອງກິດຈະກໍາການຂຸດຄົ້ນ, ການປ້ອງກັນ ບັນດາຄຸນຄ່າທາງການອະນຸລັກສູງ ແລະ ເງື່ອນໄຂໄມ້ທີ່ໄດ້ຄວບຄຸມແຫລ່ງທີ່ມາ.

**SmartStep:** SmartWood ໄດ້ອອກແບບວິທີການດຳເນີນງານ ການຈັດສັນຄຸ້ມຄອງປ່າ ທີ່ເປັນແນວທາງໃຫ້ບັນລຸການຢັ້ງຢືນ FSC ໄດ້ງ່າຍຂື້ນ.

**Verification Claim: ການຢັ້ງຢືນການກວດສອບ**

ເອກະສານທີ່ອະທິບາຍກອບການກວດສອບທີ່ຈຳເປັນ ເພື່ອປະກອບໄປກັບ ການນຳໃຊ້ເຄື່ອງໝາຍກວດສອບຂອງ Rainforest Alliance ຫລື SmartWood .

**Verification Scope: ກອບການກວດສອບ**

ແມ່ນການກຳນົດ ຂະນິດພັນ ແລະ ເຂດທີ່ເຂົ້າຮ່ວມທັງໝົດ ເພື່ອລວມເຂົ້າໃນໃບກວດສອບ.

**Verification Statement: ໃບກວດສອບ/ເອກະສານກວດສອບ**

ໃບກວດສອບ ໄດ້ອອກໃຫ້ໂດຍ Rainforest Alliance ປະກອບມີ ການພິສູດ ວ່າ ອົງການຈັດຕັ້ງໄດ້ບັນລຸຕາມເງື່ອນໄຂ ຂອງ ມາດຖານ VLO ຫລື VLC ແລ້ວ ແລະ ໄດ້ກຳນົດ ກອບຂອງການກວດສອບນຳ.

**Verification Statement Holder: ຜູ້ຖືໃບກວດສອບ**

ອົງການຈັດຕັ້ງທີ່ໄດ້ຖືກກວດສອບ ໂດຍ SmartWood ໄດ້ຮັບຮອງ ການເຮັດຕາມມາດຖານສະເພາະໃດນຶ່ງ, ແລະອອກໃບກວດສອບໃຫ່ຝ່າຍທີສາມ ໂດຍມີກອບຂອງການກວດສອບສະເພາະ ແລະ ມີໄລຍະອາຍຸການໃຊ້ງານ.

**ບົດແນບທ້າຍ 2: ການຖືຄອງ ແລະ ແຫລ່ງທີ່ມາທາງກົດໝາຍໃນລາວ**

ມາດຕາ 39 ຂອງກົດໝາຍປ່າໄມ້ (2007) ກຳນົດ 4 ປະເພດການນຳໃຊ້ຊັບພະຍາກອນປ່າໄມ້:

a) ການນຳໃຊ້ສຳຫລັບທຸລະກິດ (ມາດຕາ 43)

b) ການນຳໃຊ້ຕາມປະເພນີ (ມາດຕາ 42)

c) ການນຳໃຊ້ເພື່ອສາທາລະນະປະໂຫຍດຂອງບ້ານ (Article 40)

d) ການນຳໃຊ້ຂອງຄົວເຮືອນ (ມາດຕາ 41)

ມາດຕາ 58 ຫາ 65 ສາມາດສະຫລຸບຫຍໍ້ໄດ້ ເຖິງປະເພດການຄຸ້ມຄອງ ແລະ ນຳໃຊ້ ໃນ ສາມປະເພດປ່າ: i) ປ່າຜະລິດ; ii) ປ່າປ້ອງກັນ; ແລະ iii) ປ່າສະຫງວນ

ອີງຕາມດຳລັດຂອງນາຍົກ 17 (2008) ແລະການຈັດຕັ້ງປະຕິບັດລະບຽບການຕ່າງໆ, ການຂຸດຄົ້ນໄມ້ເພື່ອສົ່ງອອກແມ່ນອະນຸຍາດໃຫ້ເຮັດໃນເຂດປ່າຜະລິດເທົ່ານັ້ນ ພາຍໃຕ້ແຜນຈັດສັນຄຸ້ຄອງແບບຍືນຍົງ.

ໃນປີ1999 ແລະ 2001, ລາວໄດ້ຫ້າມການສົ່ງອອກໄມ້ທ່ອນ ແລະ ໃຫ້ສົ່ງອອກແຕ່ໄມ້ແປຮູບ. ການສົ່ງອອກ ປີ 2004 ແມ່ນໄດ້ກຳນົດໃຫ້ສົ່ງໄມ້ເຄິ່ງສຳເລັດຮູບ ແລະໃນປີ 2007 ກະຊວງອຸດສະຫະກຳ ແລະ ການຄ້າ ໄດ້ແຈ້ງການໃຫ້ສົ່ງອອກຜະລິດຕະພັນສຳເລັດຮູບ 100% . ໄມ້ທີ່ໄດ້ຍຶດອາດຈະປະມູນຂາຍ ຕາມລະບຽບການສະເພາະ ແຕ່ບໍ່ໃຫ້ຂາຍໃຫ້ຜູ້ກະທຳຜິດ.

| ແຫລ່ງທີ່ມາທາງກົດໝາຍ | ຄຳອະທິບາຍ | ສະຖານະພາບຂອງປ່າໄມ້ |
|---|---|---|
| ທຸລະກິດເອກະຊົນ | ທຸລະກິດທີ່ເປັນຂອງບຸກຄົນ ທີ່ມີສິດທາງນິຕິກຳ ທີ່ອະນຸຍາດໂດຍ ລັດຖະບານ(ກະຊວງແຜນການ ແລະ ການລົງທືນ ແລະ ກະຊວງອຸດສະຫະກຳ ແລະ ການຄ້າ), ເປັນສະມາຊິກຂອງສະມາຄົມປຸງແຕ່ງໄມ້ລາວ ແລະ ມີບັນຊີເງິນຢູ່ທະນາຄານລາວ. ດິນປ່າໄມ້ແມ່ນລັດເປັນເຈົ້າຂອງ. ທຸລະກິດບໍ່ມີສິດຖືຄອງທີ່ດິນ ແຕ່ ລັດອະນຸຍາດສິດ ເພື່ອ ຄຸ້ມຄອງ, ຂຸດຄົ້ນ,ຂົນສົ່ງ, ສົ່ງອອກໄມ້ ອີງຕາມແຜນຈັດສັນຄຸ້ມຄອງແບບຍືນຍົງ ແລະໂຄຕາປະຈຳປີ. | ປ່າຜະລິດຂອງລັດ |
| ໜ່ວຍປ່າໄມ້ບ້ານ | ການຄຸ້ມຄອງປ່າປະເພດນີ້ ແມ່ນບ້ານ ຊຶ່ງມີສະຖານະພາບ | ປ່າຜະລິດຂອງລັດ ຫລື |

| | | |
|---|---|---|
| | ເປັນນິຕິບຸກຄົນ.  ນາຍບ້ານ ແມ່ນພະນັກງານລັດ ແລະເຮັດວຽກຄຸ້ມຄອງປ່າໄມ້ຕາມກົດໝາຍປ່າໄມ້ໄດ້ລະບຸ. ທີ່ດິນ ທີ່ໄດ້ຄຸ້ມຄອງ ໄດ້ຖືກແບ່ງອອກເປັນເຂດທີ່ດິນປ່າໄມ້ ແລະ ເປັນເຂດນຳໃຊ້ ອື່ນໆ, ລວມມີ ປ່າຜະລິດຂອງບ້ານ, ປ່າປ້ອງກັນ ແລະປ່າສະຫງວນ.  ບ້ານມີກຳນົດໂຄຕາປະຈຳປີ ເພື່ອຂຸດຄົ້ນໄມ້ຈາກເຂດປ່າຜະລິດບ້ານ ມານຳໃຊ້ໃນບ້ານ.ບ້ານມີສິດໄດ້ຮັບຜົນປະໂຫຍດຈາກການຂາຍໄມ້ຈາກເຂດປ່າຜະລິດ ຕາມລະບຽບການ.  ການຖືຄອງປ່າໄມ້ຍັງແມ່ນລັດ ແຕ່ ທີ່  ດິນປ່າໄມ້ອາດຈະແບ່ງປັນໃຫ້ບ້ານເປັນຜູ້ຄຸ້ມຄອງ ຕາມລະບຽບການ. | ເຂດປ່າຜະລິດຂອງບ້ານ ທີ່ໄດ້ແບ່ງປັນໃຫ້ບ້ານຄຸ້ມຄອງ |
| ການນຳໃຊ້ໃນຄອບຄົວ  ຕາມໃບຢັ້ງ ຢືນນຳໃຊ້ທີ່  ດິນ | ຄອບຄົວທີ່ຢູ່ໃນບ້ານ ອາດນຳໃຊ້ດິນປ່າໄມ້ຊຸດໂຊມເພື່ອປູກໄມ້. ຄອບຄົວອາດຈະໄດ້ຮັບໃບຢັ້ງຢືນນຳໃຊ້ທີ່ດິນຊົ່ວຄາວ ທີ່ໄດ້ແບ່ງປັນໃຫ້ປະມານ 3 ເຮັກຕາ ຕໍ່ແຮງງານໃນຄອບຄົວ ຫລືຖ້າຫລາຍກົ່ວ ຕ້ອງໄດ້ເຊົ່າຈາກລັດ. | ປ່າຊຸດໂຊມ ຂອງລັດ |
| ສະຫະກອນ | ການຄຸ້ມຄອງທີ່ດິນນີ້ແມ່ນໄດ້ເຮັດໃນລະບຽບການເກົ່າ ເມື່ອສະຫະກອນ ແລະ ລັດວິສາຫະກິດໄດຖືກສ້າງຂື້ນ. | ປ່າຜະລິດຂອງລັດ ຫລື ທີ່ດິນປ່າໄມ້ຊຸດໂຊມ. |
| ປ່າໄມ້ບຸກຄົນ | ຕົ້ນໄມ້ທີ່ຢູ່ນອກເຂດປ່າທີ່ໄດ້ກຳນົດໄວ້, ຫລື ນອກເຂດທີ່ດິນຂອງລັດ ທີ່ມີໃນເນື້ອທີ່ດິນສ່ວນບຸກຄົນທີ່ໄດ້ຂື້ນທະບຽນ. ຕົ້ນໄມ້ທີ່ຢູ່ໃນດິນຂອງບຸກຄົນ, ແມ່ນເປັນສິດຂອງເຈົ້າຂອງທີ່ຈະນຳໃຊ້ ແຕ່ຕ້ອງຂໍອະນຸຍາດເວລາຂຸດຄົ້ນ, ຂາຍ, ຂົນສົ່ງ ຫລືສົ່ງອອກ. | ດິນສ່ວນບຸກຄົນ ຫລື ເຂດທີ່ເປັນຂອງລັດ ທີ່ຢູ່ນອກເຂດປ່າທີ່ໄດ້ກຳນົດໄວ້. |
| ການນຳໃຊ້ຂອງລັດຖະບານ ເພື່ອປະໂຫຍດຂອງສາທາລະນະ. | ປ່າທີ່ນຳໃຊ້ເພື່ອປະໂຫຍດຂອງສາທາລະນະອາດຈະລວມເອົາປ່າປ້ອງກັນ, ປ່າສະຫງວນ, ເຂດປ້ອງກັນແຫລ່ງນ້ຳ, ເຂດທ່ອງທ່ຽວ.  ເຂດດັ່ງກ່າວນີ້ ແມ່ນລັດເປັນເຈົ້າຂອງ ແລະຄຸ້ມຄອງໂດຍລັດ.   ການຂຸດຄົ້ນໄມ້ໃນເຂດດັ່ງກ່າວແມ່ນຜິດກົດໝາຍ, ຢ່າງນ້ອຍຕ້ອງມີການຮັບຮອງພິເສດຈາກລັດ. | ປ່າປ້ອງການ ແລະປ່າສະຫງວນຂອງລັດ. |

ບົດແນບທ້າຍ 3: ບັນຊີ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໃນລາວ.

| ຫລັກການ | ມາດຖານ | ກົດໝາຍ/ລະບຽບການ/ເອກະສານ | ແຫລ່ງ/ບ່ອນທີ່ກ່ຽວພັນ |
|---|---|---|---|
| 1 | 1.1 | ກົດໝາຍທຸລະກິດ (2005); ກົດໝາຍປ່າໄມ້ (2007); ດຳລັດນາຍົກ 17 (2008); ລະບຽບການ ຂອງ ກະຊວງອຸດສະຫະກຳ ແລະ ການຄ້າ 1976 (2007); ລະບຽບການ ຂອງ ກະຊວງອຸດສະຫະກຳ ແລະ ການຄ້າ 2056 (2008); ລະບຽບການ ຂອງ ກະຊວງອຸດສະຫະກຳ ແລະ ການຄ້າ1963 (2008); ລະບຽບການ ຂອງ ກະຊວງອຸດສະຫະກຳ ແລະ ການຄ້າ719 (2009); ລະບຽບການ ຂອງ ກະຊວງອຸດສະຫະກຳ ແລະ ການຄ້າ359 (2008); ລະບຽບການ ຂອງ ກະຊວງອຸດສະຫະກຳ ແລະ ການຄ້າ 221 (2007) | ກະຊວງ ກະສິກຳ ແລະປ່າໄມ້ (MA)F; ກະຊວງອຸດສະຫະກຳ ແລະ ການຄ້າ (MOIC) |
| | 1.2 | ກົດໝາຍປ່າໄມ້ (2007); ດຳລັດນາຍົກ 17 (2008); ດຳລັດນາຍົກ 59 (2002); ລະບຽບການ ຂອງ ກະຊວງອຸດສະຫະກຳ ແລະ ການຄ້າ1963 (2008) | ກະຊວງ ກະສິກຳ ແລະປ່າໄມ້ (MA)F; ກະຊວງອຸດສະຫະກຳ ແລະ ການຄ້າ (MOIC) |
| | 1.3 | ກົດໝາຍປ່າໄມ (2007); ດຳລັດນາຍົກ 59 (2002); ດຳລັດນາຍົກ 17 (2008); ລະບຽບການຂອງກະຊວງກະສິກຳ ແລະ ປ່າໄມ້ 524 (2001); ລະບຽບການ ຂອງ ກະຊວງອຸດສະຫະກຳ ແລະ ການຄ້າ 488 (2009) | ກະຊວງ ກະສິກຳ ແລະປ່າໄມ້ (MA)F; ກະຊວງອຸດສະຫະກຳ ແລະ ການຄ້າ (MOIC) |
| 2 | 2.1 | ກົດໝາຍປ່າໄມ້ (2007); ດຳລັດນາຍົກ 17 (2008); ດຳລັດນາຍົກ 59 (2002); ລະບຽບການ ຂອງ ກະຊວງອຸດສະຫະກຳ ແລະ ການຄ້າ1963 (2008) | ກະຊວງ ກະສິກຳ ແລະປ່າໄມ້ (MA)F; ກະຊວງອຸດສະຫະກຳ ແລະ ການຄ້າ (MOIC) |
| | 2.2 | ດຳລັດນາຍົກ 17 (2008) | ກະຊວງ ກະສິກຳ ແລະປ່າໄມ້ (MA)F; ກະຊວງອຸດສະຫະກຳ ແລະ ການຄ້າ (MOIC) |
| | 2.3 | ລະບຽບການ ຂອງ ກະຊວງອຸດສະຫະກຳ ແລະ ການຄ້າ1415 (2008); ລະບຽບການ ຂອງ ກະຊວງອຸດສະຫະກຳ ແລະ ການຄ້າ 710 (2008) | ກະຊວງ ກະສິກຳ ແລະປ່າໄມ້ (MA)F; ກະຊວງອຸດສະຫະກຳ ແລະ ການຄ້າ (MOIC) |

| | | | |
|---|---|---|---|
| | 2.4 | ກົດໝາຍປ່າໄມ້ (2007); ກົດໝາຍສະພາບແວດລ້ອມ (1996); ດຳລັດນາຍົກ 59 (2002); ດຳລັດນາຍົກ 17 (2008); ລະບຽບການ ຂອງ ກະຊວງອຸດສະຫະກຳ ແລະ ການຄ້າ 1415 (2008); ຄຳສັ່ງນາຍົກ ວ່າດ້ວຍການຈັດຕັ້ງປະຕິບັດ CITES (2004); ລະບຽບການ ຂອງ ກະຊວງອຸດສະຫະກຳ ແລະ ການຄ້າ 488 (2009); ລະບຽບການຂອງກະຊວງການເງິນ 92 (2009) | ກະຊວງ ກະສິກຳ ແລະປ່າໄມ້ (MA)F; ກະຊວງອຸດສະຫະກຳ ແລະ ການຄ້າ (MOIC) |
| | 2.5 | ກົດໝາຍປ່າໄມ້ (2007); ກົດໝາຍສະພາບແວດລ້ອມ (1996) | ກະຊວງກະສິກຳ ແລະ ປ່າໄມ້ |
| 3 | 3.1 | ກົດໝາຍປ່າໄມ້ (2007); ດຳລັດນາຍົກ 17 (2008); ລະບຽບການຂອງກະຊວງການເງິນ 92 (2009); ລະບຽບການ ຂອງ ກະຊວງອຸດສະຫະກຳ ແລະ ການຄ້າ 710 (2008); ລະບຽບການ ຂອງ ກະຊວງອຸດສະຫະກຳ ແລະ ການຄ້າ 359 (2008); ລະບຽບການ ຂອງ ກະຊວງອຸດສະຫະກຳ ແລະ ການຄ້າ 1963 (2008) | ກະຊວງ ກະສິກຳ ແລະປ່າໄມ້ (MA)F; ກະຊວງອຸດສະຫະກຳ ແລະ ການຄ້າ (MOIC) |
| 4 | 4.1 | ກົດໝາຍປ່າໄມ້ (2007); ກົດໝາຍວິສາຫະກິ (2005); ດຳລັດນາຍົກ 17 (2008); ລະບຽບການ ຂອງ ກະຊວງອຸດສະຫະກຳ ແລະ ການຄ້າ 1976 (2007); ລະບຽບການ ຂອງ ກະຊວງອຸດສະຫະກຳ ແລະ ການຄ້າ 2056 (2008); ລະບຽບການ ຂອງ ກະຊວງອຸດສະຫະກຳ ແລະ ການຄ້າ 719 (2009); ລະບຽບການ ຂອງ ກະຊວງອຸດສະຫະກຳ ແລະ ການຄ້າ 1963 (2008) | ກະຊວງ ກະສິກຳ ແລະ ປ່າໄມ້(MA)F; ກະຊວງ ອຸດສະຫະກຳແລະ ການ ຄ້າ (MOIC) |
| | 4.2 | ກົດໝາຍພາສີ (2005); ລະບຽບການຂອງກະຊວງການເງິນ 92 (2009); ລະບຽບການ ຂອງ ກະຊວງອຸດສະຫະກຳ ແລະ ການຄ້າ 1963 (2008); ລະບຽບການ ຂອງ ກະຊວງ ອຸດສະ ຫະກຳ ແລະ ການຄ້າ 97 (2009) | ກະຊວງ ກະສິກຳ ແລະ ປ່າໄມ້ (MA)F; ກະ ຊວງອຸດສະຫະກຳ ແລະການຄ້າ (MOIC); ກະຊວງ ການ ເງິນ (MOF) |
| | 4.3 | ກົດໝາຍປ່າໄມ້ (2007); ດຳລັດນາຍົກ 17 (2008); ດຳລັດ ນາຍົກ 59 (2002); ລະບຽບການ ຂອງ ກະຊວງ ອຸດສະ ຫະກຳ ແລະ ການຄ້າ 157 (2008); ລະບຽບການ ຂອງ ກະຊວງ ອຸດສະ ຫະກຳ ແລະ ການຄ້າ 359 (2008); ລະບຽບການ ຂອງ ກະຊວງ ອຸດສະ ຫະກຳ ແລະ ການຄ້າ | ກະຊວງ ກະສິກຳ ແລະ ປ່າໄມ້(MA)F; ກະ ຊວງອຸດສະຫະກຳ ແລະ ການຄ້າ (MOIC) |

| | | | |
|---|---|---|---|
| | | 1963 (2008) | |
| | 4.4 | ຄຳສັ່ງນາຍົກວ່າດ້ວຍການຈັດຕັ້ງປະຕິບັດ CITES (2004); ຄຳສັ່ງນາຍົກ18 ວ່າດ້ວຍການອະນຸຍາດນຳເຂົ້າ (2009 | ກະຊວງ ກະສິກຳ ແລະ ປ່າໄມ້ |
| | 4.5 | ກົດໝາຍປ່າໄມ້ (2007); ດຳລັດນາຍົກ 17 (2008ດຳລັດ ນາຍົກ 59 (2002); ລະບຽບການ ຂອງ ກະຊວງ ອຸດສະ ຫະກຳ ແລະ ການຄ້າ 1601 (2008); ລະບຽບການ ຂອງ ກະຊວງ ອຸດສະ ຫະກຳ ແລະ ການຄ້າ 359 (2008); ລະບຽບການ ຂອງ ກະຊວງ ອຸດສະ ຫະກຳ ແລະ ການຄ້າ 157 (2008) | ກະຊວງ ກະສິກຳ ແລະ ປ່າໄມ້(MA)F; ກະຊວງ ອຸດສະຫະກຳ ແລະ ການຄ້າ (MOIC) |
| | 4.6 | ກົດໝາຍປ່າໄມ້ (2007); ດຳລັດນາຍົກ 17 (2008); ລະບຽບ ການຂອງກະຊວງການເງິນ 92 (2009); ລະບຽບການ ຂອງ ກະຊວງ ອຸດສະ ຫະກຳ ແລະ ການຄ້າ 1415 (2008) | ກະຊວງ ກະສິກຳ ແລະ ປ່າໄມ້(MA)F; ກະຊວງ ອຸດສະຫະກຳແລະການ ຄ້າ (MOIC); ກະຊວງ ການ ເງິນ (MOF) |

## ບັນຊີນິຕິບັນຍັດ ໃນ ລາວ

1. ກົດໝາຍປ່າໄມ້ (1996; ປັບປຸງ 2007)
2. ກົດໝາຍວິສາຫະກິ ແລະ ທຸລະກິດ (2005)
3. ກົດໝາຍພາສີ (2005)
4. ກົດໝາຍສະພາບແວດລ້ອມ (1996)
5. ກົດໝາຍຊັບພະຍາກອນນ້ຳ ແລະ ນ້ຳ (1996)
6. ກົດໝາຍທີ່ດິນ (1997; ປັບປຸງ 2003)
7. ດຳລັດນາຍົກ 59 ວ່າດ້ວຍ ການຄຸ້ມຄອງປ່າແບບຍືນຍົງໃນເຂດປ່າຜະລິດ (2003)
8. ດຳລັດນາຍົກ 17 ວ່າດ້ວຍ ການສັ່ງຄວາມເຂັ້ມແຂງໃນການຄຸ້ມຄອງປ່າ (2008)
9. ລະບຽບການ ຂອງ ກະຊວງ ອຸດສະ ຫະກຳ ແລະ ການຄ້າ 51 ວ່າດ້ວຍຮູບແບບ ແລະ ຂະໜາດຂອງຜະລິດຕະພັນໄມ້ (2009)
10. ລະບຽບການ ຂອງ ກະຊວງ ອຸດສະ ຫະກຳ ແລະ ການຄ້າ 1415 ວ່າດ້ວຍຮູບແບບ ແລະ ຂະໜາດຂອງຜະລິດຕະພັນໄມ້ (2008)
11. ລະບຽບການ ຂອງ ກະຊວງ ອຸດສະ ຫະກຳ ແລະ ການຄ້າ719 ວ່າດ້ວຍ ໂຮງງານປຸງແຕ່ງໄມ້ (2009)
12. ລະບຽບການ ຂອງ ກະຊວງ ອຸດສະ ຫະກຳ ແລະ ການຄ້າ 488 ວ່າດ້ວຍການນຳໃຊ້ໂຄຕາໄມ້ (2009)
13. ລະບຽບການ ຂອງ ກະຊວງ ອຸດສະ ຫະກຳ ແລະ ການຄ້າ157 ວ່າດ້ວຍ ກິດຈະກຳ ທຸລະກິດໄມ້ທ່ອນ (2008)
14. ລະບຽບການ ຂອງ ກະຊວງ ອຸດສະ ຫະກຳ ແລະ ການຄ້າ 1976 ວ່າດ້ວຍການຂາຍໄມ້ ຢູ່ສະໜາມສອງ (2007)
15. MOF Guideline 92 on Revenue Collection of Sales from Wood and NTFP Products (2009)
16. ລະບຽບການ ຂອງ ກະຊວງ ອຸດສະ ຫະກຳ ແລະ ການຄ້າ 710 ວ່າດ້ວຍ ຄ່າໄມ້ທ່ອນຂະໜາດນ້ອຍ (2008)
17. ລະບຽບການ ຂອງ ກະຊວງ ອຸດສະ ຫະກຳ ແລະ ການຄ້າ 2056 ວ່າດ້ວຍການຈັດແບ່ງໂຄຕາໄມ້ (2008)
18. ລະບຽບການ ຂອງ ກະຊວງ ອຸດສະ ຫະກຳ ແລະ ການຄ້າ 359 ວ່າດ້ວຍການສົ່ງອອກ ຜະລິດຕະພັນໄມ້ ແລະເຄື່ອງປ່າຂອງດົງ (2008)
19. ລະບຽບການ ຂອງ ກະຊວງ ອຸດສະ ຫະກຳ ແລະ ການຄ້າ 157ວ່າດ້ວຍ ການຂົນສົ່ງໄມ້ທ່ອນ, ຜະລິດຕະພັນໄມ້, ເຄື່ອງປ່າຂອງດົງ ແລະ ການສົ່ງອອກ (2008)
20. ລະບຽບການ ຂອງ ກະຊວງ ອຸດສະ ຫະກຳ ແລະ ການຄ້າ1963ວ່າດ້ວຍການຂາຍໄມ້ (2008)
21. ລະບຽບການ ຂອງ ກະຊວງ ອຸດສະ ຫະກຳ ແລະ ການຄ້າ1601 ການຂົນສົ່ງໄມ້ທ່ອນ, ຜະລິດຕະພັນໄມ້, ເຄື່ອງປ່າຂອງດົງ ແລະ ການສົ່ງອອກ (2008)
22. ການຂົນສົ່ງໄມ້ທ່ອນ, ຜະລິດຕະພັນໄມ້, ເຄື່ອງປ່າຂອງດົງ ແລະ ການສົ່ງອອກ 97 ວ່າດ້ວຍ ລາຄາໄມ້ຢູ່ສະໜາມສອງ (2009)

23. ລະບຽບການຂອງກະຊວງກະສິກຳ ແລະ ປ່າໄມ້ 535 ວ່າດ້ວຍ ການຄຸ້ມຄອງປ່າໄມ້ບ້ານ (2001)
24. ຄຳສັ່ງ ຂອງ ກະຊວງກະສິກຳ ແລະ ປ່າໄມ 54 ວ່າດ້ວຍ ສິດນຳໃຊ້ຕາມປະເພນີ (1996)
25. ບົດແນະນຳ ຂອງ ກະຊວງກະສິກຳ ແລະ ປ່າໄມ້ 377 ວ່າດ້ວຍ ການນຳໃຊ້ຊັບພະຍາກອນປ່າໄມ້ຕາມປະເພນີ (1996)

**ບົດແນບທ້າຍ 4: ບັນຊີຊະນິດພັນໄມ້ ທີ່ໃກ້ຈະສູນພັນ ໃນລາວ**

ບັນຊີຊະນິດພັນໄມ້ ທີ່ໃກ້ຈະສູນພັນ ໃນລາວ ສາມາດຫາໄດ້ ໃນ website ຂອງ CITES (www.cites.org) ທີ່ລາວເປັນປະເທດສະມາຊິກ.

**ບົດແນບທ້າຍ 5: ບັນຊີ ຂໍ້ຕົກລົງທາງສະພາບແວດລ້ອມ ແລະ ອົງການແຮງງານສາກົນ ທີ່ລາວໄດ້ຮັບຮອງ**

1. ຂໍ້ຕົກລົງ ຂອງ ASEAN ວ່າດ້ວຍ ການອະນຸລັກທຳມະຊາດ ແລະ ແຫລ່ງຊັບພະຍາກອນທຳມະຊາດ 1985
2. ການປ້ອງກັນມໍລະດົກຂອງຊາດ ແລະ ວັດທະນະທະຂອງໂລກ (Protection of the World Cultural and Natural Heritage 1987)
3. ຂໍ້ຕົກລົງ ວ່າດ້ວຍ ການຮ່ວມມື ສຳຫລັບການພັດທະນາອາງນ້ຳຂອງແບບຍືນຍົງ ( Agreement on the Cooperation for the Sustainable Development of the Mekong River Basin) 1995
4. ສົນທິສັນຍາຂອງສະຫະປະຊາຊາດ ເພື່ອຕ້ານການກາຍເປັນທະເລຊາຍ (United Nations Convention to Combat Desertification) 1995.
5. ສົນທິສັນຍາຂອງສະຫະປະຊາຊາດ ສຳຫລັບ ການປ່ຽນແປງພູມອາກາດ ແລະ 5. ສົນທິສັນຍາມອນທຣີອານ (United Nations Framework Convention for Climate Change and Montreal Protocol) 1995; 1998
6. ສົນທິສັນຍາ ວ່າດ້ວຍ ຊີວະນາໆພັນ (Convention on Biological Diversity) 1996
7. ຖະແຫລງການ ໃນຮອບພັນປີ (Millennium Declaration) 2000
8. ສົນທິສັນຍາວ່າດ້ວຍການຄ້າຂາຍຊະນິດພັນພືດ ແລະ ສັດທີ່ໄກ້ຈະສູນພັນ (Convention on International Trade in Endangered Species of Flora and Fauna) 2004
9. ສົນທິສັນຍາຂອງອົງການແຮງງານສາກົນ (International Labour Organization Conventions)